


**Issue 4**

# Fact-Checking

Journalism and Media Resources Guidebooks

In collaboration with

Supported by

# ສາລະບານ


I. ພາກສະເໜີ 05

II. ຂ່າວປອມ: ຄວາມຮູ້ເບື້ອງຕົ້ນ 07

III. ການກວດສອບຄວາມຈິງທົ່ວໄປໃນກອງບັນນາທິການ 11

IV. ການກວດສອບຄວາມຈິງໃນພື້ນທີ່ 12

V. ການກວດສອບຄວາມຖືກຕ້ອງທາງອອນລາຍ 13

VI. ສັນຍານເຕືອນທີ່ຄວນລະວັງກ່ອນເຜີຍແຜ່ 15

VII. ວິທີປະຕິບັດທີ່ດີທີ່ສຸດ 16

VIII. ຄວາມຄົບຖ້ວນຂອງຂໍ້ມູນແມ່ນຫຍັງ? 16

IX. ການສ້າງຄວາມເຂົ້າໃຈກ່ຽວກັບປະເພດຂໍ້ມູນທີ່ເປັນອັນຕະລາຍ 17

X. ການກວດສອບອິດທິພົນຈາກຕ່າງປະເທດ: FIO & FIMI 21

XI. ວິທີຝຶກອົບຮົມທີມງານກ່ຽວກັບການກວດສອບຄວາມຈິງທີ່ໃນກອງບັນນາທິການ 25

XII. ວິທີລາຍງານບັນຊີປອມໃນສື່ສັງຄົມອອນລາຍ 27

XIII. ຍ້ອນຫຍັງການກວດສອບຄວາມຈິງຈິ່ງ ສາມາດປົກປ້ອງທ່ານທາງກົດໝາຍໄດ້ 35

XIV. ການຕອບໂຕ້ກັບຂ່າວປອມ 39

XV. ເຫດຜົນທີ່ການກວດສອບຄວາມຈິງສຳຄັນ 40

ເອກະສານຊ້ອນທ້າຍ 43


news

# I. ພາກສະເໜີ

**ໄດ້ຂໍ້ມູນນີ້ມາຈາກໃສ?**
**ຈະຮູ້ໄດ້ແນວໃດວ່າຂໍ້ມູນນັ້ນຖືກຕ້ອງ?**
**ຂໍ້ມູນນັ້ນເຊື່ອຖືໄດ້ບໍ?**
**ມີແຫຼ່ງຂໍ້ມູນທີ່ໜ້າເຊື່ອຖືກວ່າທີ່ພວກເຮົາສາມາດໃຊ້ໄດ້ບໍ?**

---

ໃນຍຸກດິຈິຕອນປັດຈຸບັນ, ຂໍ້ມູນຖືກສົ່ງຕໍ່ຢ່າງວ່ອງໄວ ເຊັ່ນດຽວກັບຂໍ້ມູນເທັດ (ບໍ່ຈິງ), ເຊິ່ງສາມາດກໍານົດຄໍາຄິດເຫັນສາທາລະນະຊົນ ແລະ ມີອິດທິພົນຕໍ່ເຫດການສໍາຄັນໄດ້.

ບົດບາດຂອງສື່ມວນຊົນ ແມ່ນເຮັດໜ້າທີ່ສະໜອງຂໍ້ມູນຂ່າວສານແກ່ສາທາລະນະຊົນຢ່າງຖືກຕ້ອງຄົບຖ້ວນ.

ສິ່ງດັ່ງກ່າວຖືເປັນເຫດຜົນທີ່ ການກວດສອບຄວາມຈິງ (fact-checking) ມີບົດບາດສໍາຄັນໃນການລາຍງານຂ່າວດິຈິຕອນ. ທັງຊ່ວຍໃຫ້ສາມາດຮັບປະກັນໄດ້ວ່າ ຂ່າວສານທີ່ເຜີຍແຜ່ສູ່ສາທາລະນະຊົນມີຄວາມຖືກຕ້ອງ ແລະ ເຊື່ອຖືໄດ້.

ໃນປະເທດລາວ, Facebook ແມ່ນແພລດຟອມ (platform) ທີ່ໄດ້ຮັບຄວາມນິຍົມສໍາລັບຜູ້ໃຊ້ອິນເຕີເນັດ ໃນການຕິດຕາມ ແລະ ຮັບຮູ້ຂໍ້ມູນຂ່າວສານຕະຫຼອດເວລາ. ຢ່າງໃດກໍຕາມ, ມີ (ເພຈ) ໜ້າຂ່າວຈໍານວນຫຼາຍປາກົດໃນ Facebook, ມີທັງ ໜ້າຂ່າວເປັນທາງການ ແລະ ບໍ່ເປັນທາງການ.

ໜ້າຂ່າວທີ່ບໍ່ເປັນທາງການ ອາດມີການປ່ຽນແປງ ຫຼື ບິດເບືອນຂໍ້ມູນຈາກຄວາມຈິງໄດ້. ຍ້ອນແນວນັ້ນ, ນັກຂ່າວຄວນໃຊ້ຄວາມລະມັດລະວັງຢ່າງຮອບຄອບ ແລະ ນໍາໃຊ້ວິທີການຕ່າງໆເພື່ອກວດສອບວ່າ ແຫຼ່ງຂໍ້ມູນທີ່ອ້າງອີງນັ້ນຖືກຕ້ອງ ຫຼື ບໍ່. ຂໍ້ມູນເທັດ (ບໍ່ມີຈິງ) ຖືກແຜ່ກະຈາຍຢ່າງວ່ອງໄວ ແລະ ສາມາດທໍາລາຍຄວາມໜ້າເຊື່ອຖືຂອງວົງການຂ່າວໄດ້.ຫຼັກການສໍາຄັນສູ່ຄວາມສໍາເລັດໃນການຕໍ່ຕ້ານຂ່າວປອມກໍແມ່ນ **ຄວາມໂປ່ງໃສ.**

ຄວນລະບຸແຫຼ່ງຂໍ້ມູນໂດຍລະອຽດ ແລະ ອະທິບາຍກ່ຽວກັບວິທີການກວດສອບຄວາມຖືກຕ້ອງຂອງຂໍ້ມູນເປັນປະຈໍາ. ວິທີນີ້ສາມາດຊ່ວຍສ້າງຄວາມເຊື່ອໝັ້ນແກ່ຜູ້ອ່ານ ແລະ ສະແດງໃຫ້ເຫັນວ່າ ຂ່າວ/ບົດຄວາມດັ່ງກ່າວ ໄດ້ຮັບການກວດສອບຢ່າງຮອບຄອບແລ້ວ.

ນອກຈາກນີ້, ຍັງເປັນມາດຕະການປ້ອງກັນການເຜີຍແຜ່ຂໍ້ມູນເທັດນໍາອີກ.

**ຂໍ້ມູນດັ່ງກ່າວມີຄວາມສົມເຫດສົມຜົນ ຫຼື ບໍ່?**
**ຍັງມີຂໍ້ມູນໃດບໍ່ຄົບຖ້ວນ ຫຼື ຂາດຫາຍໄປ?**
**ມີຫຼັກຖານສະໜັບສະໜູນປະເດັນສຳຄັນ ຫຼື ບໍ່?**

# II. ຂ່າວປອມ: ຄວາມຮູ້ເບື້ອງຕົ້ນ

## ວິທີສັງເກດຂ່າວປອມ:

- **ຂໍ້ມູນບໍ່ຊັດເຈນ**

ຂ່າວປອມສ່ວນໃຫຍ່ຈະສັ້ນ, ບໍ່ຕໍ່ເນື່ອງ ແລະ ຖືກແບ່ງປັນໂດຍບໍ່ມີລາຍລະອຽດ ສຳຄັນໃດໆ ເຊັ່ນ ວັນທີ ຫຼື ສະຖານທີ່ເກີດເຫດ.

- **ຮູບພາບມີຄວາມລະອຽດຕ່ຳ ຫຼື ຮູບພາບທີ່ຜ່ານການຕັດຕໍ່**

ໜ້າຂ່າວບໍ່ເປັນທາງການ ແລະ ບຸກຄົນທົ່ວໄປໃນສື່ສັງຄົມອອນລາຍ ນິຍົມໃຊ້ ຮູບພາບ ແລະ ວິດີໂອທີ່ມີຄວາມລະອຽດຕ່ຳ ຫຼື ຖືກຕັດຕໍ່.

- **ຂາດແຫຼ່ງຂໍ້ມູນທີ່ໜ້າເຊື່ອຖື**

ຂ່າວປອມບໍ່ຄ່ອຍອ້າງອີງແຫຼ່ງຂໍ້ມູນຢ່າງເປັນທາງການ ຫຼື ແຫຼ່ງຂ່າວທີ່ມີຊື່ສຽງ.

## ຄວນເຮັດແນວໃດ?

# 1. ກວດສອບຄວາມຖືກຕ້ອງຂອງຂໍ້ມູນຈາກແຫຼ່ງຂໍ້ມູນທີ່ເປັນທາງການ

**ເຫດຜົນ:** ຂ່າວປອມສ່ວນໃຫຍ່ຈະແຜ່ກະຈາຍໂດຍບໍ່ມີການຢືນຢັນຢ່າງເປັນທາງການ.

## ວິທີປະຕິບັດ:

- ຄວນກວດສອບແຈ້ງການຂອງລັດຖະບານ, ສະຖາບັນ ຫຼື ອົງການຕ່າງໆກ່ອນ ລາຍງານຂ່າວເປັນປະຈຳ.

- ສຳລັບປະເທດລາວ, ເຊິ່ງລວມທັງໜ້າ Facebook ຢ່າງເປັນທາງການຂອງ ກະຊວງ, ຂ່າວປະຊາສຳພັນຂອງລັດຖະບານ ຫຼື ບັນຊີສື່ສັງຄົມອອນລາຍທີ່ໄດ້ຮັບການ ຢືນຢັນຄວາມຖືກຕ້ອງແລ້ວ.

- ຕົວຢ່າງ: ຖ້າເນື້ອໃນຂ່າວເວົ້າເຖິງນະໂຍບາຍໃໝ່, ໃຫ້ຄົ້ນຫາຂ່າວນັ້ນຢ່າງເປັນ ທາງການ ຫຼື ຟາຍ PDF ໃນເພຈຂອງກະຊວງກ່ອນນຳມາເຜີຍແຜ່.

## 2. ກວດສອບຂໍ້ມູນຈາກແພລດຟອມຫຼາຍແຫ່ງ

**ເຫດຜົນ:** ຂໍ້ມູນຈາກແຫຼ່ງດຽວ ອາດເຮັດໃຫ້ເກີດຄວາມເຂົ້າໃຈຜິດ ຫຼື ເປັນເທັດ.

**ວິທີປະຕິບັດ:**

- ຄົ້ນຫາຂ່າວທີ່ມີເນື້ອໃນດຽວກັນໃນແພລດຟອມທີ່ມີຊື່ສຽງຫຼາຍແຫ່ງ ເຊັ່ນ: ສຳນັກຂ່າວພາຍໃນ, ສຳນັກຂ່າວຕ່າງປະເທດ, ຫຼື ອົງການຈັດຕັ້ງທາງສັງຄົມ.

- ຫາກຂ່າວດັ່ງກ່າວປາກົດໃນແຫຼ່ງດຽວ ຫຼື ບັນຊີສື່ສັງຄົມອອນລາຍທີ່ໄດ້ຮັບການຢືນຢັນຄວາມຖືກຕ້ອງ, ໃຫ້ເຮັດເຄື່ອງໝາຍໄວ້ເພື່ອດຳເນີນການກວດສອບເພີ່ມຕື່ມ.

## 3. ໃຊ້ຄຳຫຼັກຊ່ວຍຄົ້ນຫາ

**ເຫດຜົນ:** ຊ່ວຍເປີດເຜີຍແຫຼ່ງຂ່າວຕົ້ນສະບັບ ຫຼື ລາຍງານຂ່າວທີ່ໄດ້ຮັບການຢືນຢັນແລ້ວ.

**ວິທີປະຕິບັດ:**

- ແບ່ງເນື້ອໃນຂ່າວອອກເປັນຄຳສຳຄັນ (ເຊັ່ນ ຊື່, ສະຖານທີ່, ເຫດການ) ແລ້ວຄົ້ນຫາໃນ Google, Bing, ຫຼື ແຖບຄົ້ນຫາໃນສື່ສັງຄົມອອນລາຍ.

- ໃຊ້ເຄື່ອງໝາຍຄຳອ້າງອີງສຳລັບປະໂຫຍກທີ່ກົງກັນທັງໝົດ ແລະ ເພີ່ມ"site:.gov" ຫຼື"site:.org"ເພື່ອຄົ້ນຫາແຫຼ່ງຂ່າວທີ່ໜ້າເຊື່ອຖື.



## 4. ກວດສອບປະຫວັດຂໍ້ມູນຂອງແຫຼ່ງຂ່າວ

**ເຫດຜົນ:** ບັນຊີປອມຈຳນວນຫຼາຍນິຍົມຮຽນແບບບຸກຄົນ ຫຼື ອົງການຈັດຕັ້ງທີ່ມີຕົວຕົນຈິງ.

### ວິທີປະຕິບັດ:

- ຄົ້ນຫາເຄື່ອງໝາຍຢືນຢັນຄວາມຖືກຕ້ອງ, ອາຍຸບັນຊີ, ຂ່າວທີ່ສົ່ງໄລຍະຜ່ານມາ, ແລະ ການມີສ່ວນຮ່ວມຂອງຜູ້ຕິດຕາມ.

- ຄວນລະມັດລະວັງປະຫວັດຂໍ້ມູນທີ່ພວມສ້າງໃໝ່ ຫຼື ປະຫວັດທີ່ສົ່ງເນື້ອໃນທີ່ໜ້າຕື່ນເຕັ້ນໂດຍບໍ່ມີບໍລິບົດໃດໆ.

## 5. ນຳໃຊ້ເຄື່ອງມືຂອງ Google

**ເຫດຜົນ:** ເຄື່ອງມືເຫຼົ່ານີ້ສາມາດຊ່ວຍຕິດຕາມແຫຼ່ງຂໍ້ມູນ ແລະ ຄວາມໜ້າເຊື່ອຖືຂອງເນື້ອໃນໄດ້.

### ວິທີປະຕິບັດ:

- **ເຄື່ອງມືຄົ້ນຫາຂັ້ນສູງຂອງ Google:** ເລືອກເຟັ້ນຜົນການຄົ້ນຫາໂດຍອີງຕາມວັນທີ, ພາກພື້ນ, ຫຼື ໂດເມນ ເພື່ອຄົ້ນຫາແຫຼ່ງຂໍ້ມູນທີ່ເຊື່ອຖືໄດ້.

- **ການຄົ້ນຫາດ້ວຍຮູບພາບຂອງ Google / TinEye:** ກວດສອບວ່າ ຮູບພາບຖືກນຳມາໃຊ້ຊໍ້າ ຫຼື ບິດເບືອນຄວາມຈິງ ຫຼື ບໍ່.

- **ໃຊ້ແອັບ Google News:** ຊ່ວຍຢືນຢັນວ່າມີແຫຼ່ງຂ່າວທີ່ມີຊື່ສຽງຫຼາຍແຫ່ງລາຍງານຂ່າວດຽວກັນ ຫຼື ບໍ່.

**ຄຳແນະນຳການດຳເນີນງານ:** ກຳນົດວຽກງານກວດສອບແຫຼ່ງຂໍ້ມູນໃຫ້ເປັນ**ຂັ້ນຕອນປົກກະຕິ**ສຳລັບຂ່າວສານ/ບົດຄວາມທຸກໆບົດ. ການກວດສອບຄວາມຖືກຕ້ອງກ່ອນເຜີຍແຜ່ຂ່າວໂດຍຜ່ານຂັ້ນຕອນສຳຄັນ ເຊັ່ນ ການກວດສອບຂໍ້ມູນຈາກຫຼາຍແຫຼ່ງ, ການຄົ້ນຫາຄຳຫຼັກ, ການກວດສອບຄວາມໜ້າເຊື່ອຖືຂອງບັນຊີຜູ້ໃຊ້, ແລະ ການກວດສອບຄວາມຖືກຕ້ອງຂອງຮູບພາບ ສາມາດຫຼຸດຜ່ອນຄວາມສ່ຽງໃນການເຜີຍແຜ່ຂ່າວປອມໄດ້ເປັນຢ່າງດີ.

**ຈົ່ງໃຊ້ວິຈາລະນາຍານແຫ່ງການກວດສອບຄວາມຈິງເປັນປະຈຳ ແລະ ຫຼີກເວັ້ນການເຜີຍແຜ່ຂໍ້ມູນທີ່ຍັງບໍ່ໄດ້ຮັບການຢືນຢັນຄວາມຖືກຕ້ອງໂດຍສະເພາະໃນຊ່ວງເຫດການສຸກເສີນ !**

# III. ການກວດສອບຄວາມຈິງທົ່ວໄປໃນກອງບັນນາທິການ

ກອງບັນນາທິການຂ່າວຫຼາຍແຫ່ງ, ຍັງບໍ່ມີຜູ້ເຮັດໜ້າທີ່ກວດສອບຄວາມຈິງສະເພາະ, ເຊິ່ງກໍໝາຍຄວາມວ່າ **ທັງນັກຂ່າວ ແລະ ບັນນາທິການ** ມີໜ້າທີ່ຮັບຜິດຊອບໃນການກວດສອບຄວາມຈິງທັງໝົດກ່ອນເຜີຍແຜ່.

## ສິ່ງທີ່ ນັກຂ່າວ ຄວນເຮັດ:

- ກວດສອບຄວາມຈິງສຳຄັນເປັນປະຈຳກັບແຫຼ່ງຂໍ້ມູນທີ່ເຊື່ອຖືໄດ້, ໂດຍສະເພາະຂໍ້ຄວາມອ້າງອີງ ຫຼື ຂໍ້ມູນທີ່ເປັນສ່ວນປະກອບສຳຄັນຂອງບົດຂ່າວ.

- ຄວນຈັດສັນເວລາເພື່ອອ່ານເນື້ອໃນໂດຍລະອຽດກ່ອນສົ່ງບັນນາທິການ.

## ສິ່ງທີ່ ບັນນາທິການ ຄວນເຮັດ:

- ໃຊ້ຄຳຖາມດ້ວຍເຫດຜົນໜັກແໜ້ນກ່ຽວກັບຂໍ້ມູນສຳຄັນ.

- ກວດສອບວ່າ ແຫຼ່ງຂໍ້ມູນໜັກແໜ້ນ ແລະ ໜ້າເຊື່ອຖື ຫຼື ບໍ່. ຄວນກວດສອບຄວາມຈິງຂັ້ນພື້ນຖານ (ເຊັ່ນ ການສະກົດຄຳ, ວັນທີ ແລະ ຕົວເລກ).

ສຳລັບຂ່າວສຳຄັນ ຫຼື ມີເນື້ອໃນລະອຽດອ່ອນ (ເຊັ່ນ ຂໍ້ມູນສຳຄັນທີ່ມີຄວາມຍາວ ຫຼື ການສືບສວນ-ສອບສວນທາງກົດໝາຍ), ທາງກອງບັນນາທິການອາດຈະໃຊ້ຂະບວນການກວດສອບທີ່ລະອຽດຂຶ້ນ, ໂດຍກວດສອບຄວາມຈິງທຸກຈຸດ ແລະ ອາດມີການສຳພາດແຫຼ່ງຂໍ້ມູນຄືນອີກຄັ້ງເພື່ອຮັບປະກັນຄວາມໝັ້ນໃຈ.

# IV. ການກວດສອບຄວາມຈິງໃນພື້ນທີ່

## ຄວນກວດສອບເມື່ອໃດ?

ເຫດການໃນທ້ອງຖິ່ນ, ເຫດການສຳຄັນທາງວັດທະນະທຳ, ອຸບັດເຫດ, ບົດສຳພາດ, ຂ່າວເດັ່ນ. ເມື່ອໃດກໍຕາມທີ່ສາມາດເຂົ້າເຖິງແຫຼ່ງຂໍ້ມູນໄດ້.

## ຄວນກວດສອບແນວໃດ?

- ໄປສະຖານທີ່ເກີດເຫດ. ໂອ້ລົມກັບພະຍານບຸກຄົນ ແລະ ແຫຼ່ງຂ່າວ.
- ໃຊ້ຮູບຖ່າຍ, ວິດີໂອ ແລະ ສຽງເປັນຫຼັກຖານປະກອບ.
- ຄວນພົກພາອຸປະກອນຈຳເປັນມາພ້ອມ ເຊັ່ນ: ກ້ອງຖ່າຍຮູບ, ປຶ້ມບັນທຶກ, ໄມໂຄຣໂຟນ, ໂທລະສັບ.
- ຫາກບໍ່ສາມາດສາພາດດ້ວຍຕົນເອງ, ຄວນສຳພາດທາງໂທລະສັບ.

**! ຄວນກວດສອບຂໍ້ມູນອ້າງອີງຊ້ຳຄືນໃໝ່ເປັນປະຈຳ ໂດຍສອບຖາມບຸກຄົນທີ່ກ່ຽວຂ້ອງສອງຄົນຂຶ້ນໄປ !**



# V. ການກວດສອບຄວາມຖືກຕ້ອງທາງອອນລາຍ

## ວິທີໃຊ້ເຄື່ອງມື OSINT ເພື່ອກວດສອບຄວາມຈິງ:

ນັກຂ່າວສາມາດໃຊ້ເຄື່ອງມືອອນລາຍງ່າຍໆ ສໍາລັບກວດສອບຮູບພາບ ແລະ ລະບຸຂໍ້ມູນອ້າງອີງທີ່ບໍ່ຖືກຕ້ອງໄດ້. ເຄື່ອງມືດັ່ງກ່າວມີຄື:

- **ເຄື່ອງມືຄົ້ນຫາດ້ວຍຮູບພາບ (Yandex):** ເຄື່ອງມື Yandex ເໝາະສົມເປັນພິເສດສໍາລັບໃຊ້ໃນການຄົ້ນຫາຮູບພາບເກົ່າ ຫຼື ຮູບພາບທີ່ຄ້າຍຄືກັນຈາກອາຊີ. ລອງອັບໂຫຼດຮູບພາບເພື່ອກວດເບິ່ງວ່າ ເຄີຍຖືກໃຊ້ມາກ່ອນ ຫຼື ຖືກໂຫຼດມາຈາກຂ່າວອື່ນ.

- **ຂໍ້ມູນທີ່ຝັງໃນຮູບພາບ (Metadata2Go):** ຖ້າຮູບພາບຍັງມີຄໍາອະທິບາຍຊຸດຂໍ້ມູນ (EXIF), ໃຫ້ອັບໂຫຼດເພື່ອກວດສອບລາຍລະອຽດຕ່າງໆ ເຊັ່ນ ວັນທີ, ສະຖານທີ່, ຫຼື ອຸປະກອນທີ່ໃຊ້, ເຊິ່ງຈະຊ່ວຍຢືນຢັນເວລາ ແລະ ສະຖານທີ່ຖ່າຍຮູບ.

- **ເຄື່ອງມືຕິດຕາມສື່ສັງຄົມອອນລາຍ (CrowdTangle):** ຖ້າສາມາດເຂົ້າເຖິງໄດ້, ເຄື່ອງມື CrowdTangle ສາມາດສະແດງຕໍາແໜ່ງ ແລະ ເວລາທີ່ສິ່ງ (post ໂພສ) ຫຼື ຮູບພາບປາກົດໃນອິນເຕີເນັດ, ເຊິ່ງຊ່ວຍຕິດຕາມແຫຼ່ງຂໍ້ມູນຕົ້ນສະບັບໄດ້.

- **ເຄື່ອງມືກວດສອບຕໍາແໜ່ງ (Google Maps / Mapillary):** ການປຽບທຽບອາຄານ ຫຼື ຈຸດສັງເກດໃນຮູບພາບ ກັບສະຖານທີ່ຕົວຈິງ ໂດຍໃຊ້ເຄື່ອງມື Google Maps ຫຼື Mapillary, ເຊິ່ງຈະຊ່ວຍຢືນຢັນວ່າ ຮູບພາບນັ້ນຖືກຖ່າຍໃນສະຖານທີ່ອ້າງອີງແທ້ ຫຼື ບໍ່.

- **ເຄື່ອງມືກວດສອບສະພາບອາກາດ (Windy / AccuWeather):** ເພື່ອກວດສອບວ່າມີເຫດການສະພາບອາກາດ ເຊັ່ນ ຝົນຕົກ ຫຼື ພະຍຸໃນວັນທີອ້າງອີງຂໍ້ມູນ ຫຼື ບໍ່. ຖ້າບໍ່ມີ, ສະແດງວ່າຮູບພາບນັ້ນເປັນຮູບປອມ.

**ຕົວຢ່າງ:**

ຫາກຮູບພາບດຽວກັນປາກົດໃນເຄື່ອງມື Yandex ຈາກໄລຍະຫຼາຍປີກ່ອນໜ້າ, ຄໍາອະທິບາຍຊຸດຂໍ້ມູນຈະສະແດງວ່າ ເປັນຮູບພາບເກົ່າ, ແລະ ບໍ່ມີສະພາບອາກາດຮ້າຍແຮງໃນໄລຍະບໍ່ດົນຜ່ານມາ, ແລະ ພາບດັ່ງກ່າວຖືວ່າເປັນເທັດ.

**! ຈົ່ງກວດສອບແຫຼ່ງທີ່ມາຂອງຂໍ້ມູນເປັນປະຈຳ**
**ເພື່ອຊ່ວຍໃຫ້ສາມາດຮູ້ໄດ້ວ່າ ຂໍ້ມູນນັ້ນມາຈາກໃສ,**
**ປາກົດຄັ້ງທຳອິດເມື່ອໃດ, ແລະ ແມ່ນໃຜເປັນຄົນແບ່ງປັນ !**

# VI. ສັນຍານເຕືອນທີ່ຄວນລະວັງກ່ອນເຜີຍແຜ່

ການກວດສອບຄວາມຈິງມັກພົບກັບຄວາມຜິດພາດເລັກໜ້ອຍ, ເຊັ່ນ ການພິມຜິດ ຫຼື ການອ້າງອີງຂໍ້ມູນບໍ່ຊັດເຈນ, ແຕ່ບາງຄັ້ງກໍພົບບັນຫາໃຫຍ່ກວ່າ ເຊິ່ງອາດເຮັດໃຫ້ເນື້ອໃນຂ່າວມີຄວາມໜ້າເຊື່ອຖືໃນລະດັບຕໍ່າ ຫຼື ເຖິງຂັ້ນຕ້ອງໄດ້ຍົກເລີກການເຜີຍແຜ່ໄດ້. ບັນນາທິການສາມາດຊ່ວຍຫຼີກເວັ້ນບັນຫາເຫຼົ່ານີ້ໄດ້ໂດຍລະມັດລະວັງໃນປະເດັນຕໍ່ໄປນີ້:

## 1. ຄວາມບໍ່ສົມດຸນກັນ

ຄວນລະມັດລະວັງເນື້ອໃນຂໍ້ມູນທີ່ໃຫ້ຄວາມສຳຄັນກັບມຸມມອງທີ່ບໍ່ມີຫຼັກຖານສະໜັບສະໜູນເທົ່າທຽມກັນ.

**ຖາມ:**

ມີຫຼັກຖານສະໜັບສະໜູນມຸມມອງນີ້ແທ້ ຫຼື ບໍ່, ຫຼື ພຽງຕ້ອງການໃຫ້ມີລັກສະນະ “ສົມດູນ” ກັນ?

## 2. ຂໍ້ມູນອ້າງອີງໜັກແໜ້ນແຕ່ບໍ່ມີແຫຼ່ງຂໍ້ມູນ

ຄວນລະມັດລະວັງຂໍ້ມູນອ້າງອີງທີ່ໜັກແໜ້ນແຕ່ບໍ່ມີຫຼັກຖານສະໜັບສະໜູນ.

**ຖາມ:**

ຂໍ້ມູນນີ້ໄດ້ມາຈາກໃສ? ມີໃຜແດ່ສະໜັບສະໜູນ ຫຼື ຄັດຄ້ານ?

## 3. ຂໍ້ມູນອ້າງອີງຈາກແຫຼ່ງດຽວ

ຄວນລະມັດລະວັງເປັນພິເສດ ຫາກຂໍ້ມູນອ້າງອີງທີ່ໜັກແໜ້ນຊໍ້າພັດອາໄສແຫຼ່ງຂໍ້ມູນພຽງແຫຼ່ງດຽວ

**ຖາມ:**

ຫຼັກຖານນີ້ພຽງພໍ ຫຼື ບໍ່? ສາມາດຢືນຢັນໄດ້ບໍ່?

# VII. ວິທີປະຕິບັດທີ່ດີທີ່ສຸດ

• ກຳນົດຂະບວນການກວດແກ້ໄຂໃຫ້ຊັດເຈນ:

ນັກຂ່າວ → ບັນນາທິການ → ບັນນາທິການຕົ້ນສະບັບ.

• ບໍ່ຄວນຂ້າມຂັ້ນຕອນການກວດສອບຄວາມຈິງ, ເຖິງຈະຢູ່ໃນກຳນົດເວລາທີ່ຄວນເຜີຍແຜ່ກໍຕາມ.

• ກວດສອບຂໍ້ມູນອ້າງອີງທີ່ສຳຄັນ ຫຼື ມີຄວາມສ່ຽງສູງເປັນປະຈຳ, ເຊັ່ນ ຂໍ້ມູນອ້າງອີງກ່ຽວກັບຄະດີອາຍາ, ວິທະຍາສາດ, ສຸຂະພາບ ຫຼື ຜະລິດຕະພັນທາງການແພດ.

### ລາຍການກວດສອບຄວາມຈິງແບບໄວ

- ຊື່ ແລະ ຕຳແໜ່ງ.
- ສະຖານທີ່ ແລະ ອາຍຸ.
- ວັນທີ ແລະ ໂທເລກ.
- ເພດ ແລະ ຄຳແທນນາມ.
- ຄວາມຈິງງ່າຍໆແຕ່ເກີດຄວາມເຂົ້າໃຈຜິດໄດ້ງ່າຍ.

# VIII. ຄວາມຄົບຖ້ວນຂອງຂໍ້ມູນແມ່ນຫຍັງ?

ກ່ອນກົດ "ແບ່ງປັນ" ເນື້ອໃນຂ່າວ ຫຼື ເຜີຍແຜ່ບົດຄວາມໃດໜຶ່ງ, ຄວນຕັ້ງຄຳຖາມວ່າ: ພາບລວມຂອງບົດຂ່າວ/ບົດຄວາມນີ້ ມີຄວາມຄົບຖ້ວນ ແລະ ເປັນຄວາມຈິງ ຫຼື ບໍ່?

ຄວາມຄົບຖ້ວນສົມບູນຂອງຂໍ້ມູນ ໝາຍເຖິງ ການແບ່ງປັນຂ່າວສານ ແລະ ເນື້ອໃນທີ່ຖືກຕ້ອງ, ຊື່ສັດ ແລະ ເປັນທຳຕະຫຼອດບົດ.

ນອກນີ້ຍັງໝາຍເຖິງ ການກວດສອບຄວາມຈິງ, ການເປີດເຜີຍແຫຼ່ງຂໍ້ມູນຢ່າງໂປ່ງໃສ, ແລະ ຫຼີກເວັ້ນການໃຊ້ຄຳເວົ້າເກີນຄວາມເປັນຈິງ ຫຼື ການລະເລີຍທີ່ອາດບິດເບືອນຄວາມຈິງໄດ້.

### ຄວນໃຊ້ເຄື່ອງມືກວດສອບຄວາມຈິງທີ່ເຊື່ອຖືໄດ້ ເຊັ່ນ:

- ເຄື່ອງມື **Google Fact Check Explorer** – toolbox.google.com/factcheck
- ເຄື່ອງມື **Snopes** – snopes.com
- ເຄື່ອງມື **AFP Fact Check** – factcheck.afp.com
- ເຄື່ອງມື **PolitiFact** – politifact.com

# IX. ການສ້າງຄວາມເຂົ້າໃຈກ່ຽວກັບປະເພດຂໍ້ມູນທີ່ເປັນອັນຕະລາຍ

ເປັນເລື່ອງງ່າຍທີ່ຈະລວມເອົາເນື້ອໃນທີ່ເປັນເທັດ ແລະ ຂໍ້ມູນທີ່ສ້າງຄວາມເຂົ້າໃຈຜິດເຂົ້າໄວ້ນຳກັນ; ແຕ່ໃນຄວາມຈິງແລ້ວ, ຂໍ້ມູນທີ່ເປັນອັນຕະລາຍ ບໍ່ໄດ້ເຮັດໜ້າທີ່ໃນຮູບແບບດຽວກັນທັງໝົດ. ການສ້າງຄວາມເຂົ້າໃຈກ່ຽວກັບຄວາມແຕກຕ່າງລະຫວ່າງ ຂໍ້ມູນເທັດ, ຂໍ້ມູນບິດເບືອນ ແລະ ຂໍ້ມູນທີ່ເຮັດໃຫ້ເຂົ້າໃຈຜິດນັ້ນ ຈະຊ່ວຍໃຫ້ສາມາດລະບຸຂໍ້ມູນແຕ່ລະປະເພດໄດ້ງ່າຍຂຶ້ນ ແລະ ຕອບສະໜອງໄດ້ຢ່າງຖືກຕ້ອງ.

- **ຂໍ້ມູນເທັດ (Misinformation):**
ເກີດຂຶ້ນເມື່ອຂໍ້ມູນເທັດຖືກແບ່ງປັນໂດຍບໍ່ໄດ້ຕັ້ງໃຈ. ຕົວຢ່າງ, ການລາຍງານວັນທີ ແລະ ເວລາຂອງເຫດການບໍ່ຖືກຕ້ອງໂດຍບໍ່ເຈຕະນາ.

- **ຂໍ້ມູນທີ່ເຮັດໃຫ້ເຂົ້າໃຈຜິດ (Disinformation):** ໝາຍເຖິງ ເຈຕະນາໃນການແບ່ງປັນຂໍ້ມູນ ເພື່ອຫວັງໃຫ້ຜູ້ອື່ນເຂົ້າໃຈຜິດ ຫຼື ຫຼອກລວງ. ຕົວຢ່າງເຊັ່ນ ສິ່ງຂ່າວປອມທີ່ອ້າງວ່າ ບຸກຄົນທີ່ມີຊື່ສຽງເສຍຊີວິດແລ້ວ.

- **ຂໍ້ມູນບິດເບືອນ (Malinformation):** ກໍລະນີນີ້ມີຄວາມກ່ຽວຂ້ອງກັບການແບ່ງປັນຂໍ້ມູນທີ່ເປັນຄວາມຈິງ, ແຕ່ມີເຈຕະນາກໍ່ໃຫ້ເກີດອັນຕະລາຍ ຫຼື ນຳສະເໜີຂໍ້ມູນໂດຍຂາດບໍລິບົດ. ເຊັ່ນ: ການເຜີຍແຜ່ເອກະສານຂໍ້ມູນສ່ວນຕົວຂອງຜູ້ອື່ນ ເພື່ອຫວັງທຳລາຍຊື່ສຽງ.

### ຕົວຢ່າງເພີ່ມເຕີມສຳລັບຂໍ້ມູນທີ່ເປັນອັນຕະລາຍ ທີ່ກ່ຽວຂ້ອງກັບຂໍ້ຂັດແຍ້ງລະຫວ່າງ ໄທ-ກຳປູເຈຍ:

#### ຂໍ້ມູນເທັດ:

- **ສິ່ງທີ່ເກີດຂຶ້ນ:** ມີການລາຍງານຂໍ້ມູນເທັດ ໂດຍກ່າວອ້າງວ່າ ທະຫານໄທໄດ້ດຳເນີນການທາລຸນຢ່າງໂຫດຮ້າຍປ່າເຖື່ອນ ເຊັ່ນ ຕັດຫົວທະຫານກຳປູເຈຍ ຫຼື ທຳຮ້າຍຮ່າງກາຍ.

- **ແຫຼ່ງຂໍ້ມູນ:** ລັດຖະບານໄທໄດ້ອອກມາປະຕິເສດຂໍ້ກ່າວຫາເຫຼົ່ານີ້ແບບເປີດເຜີຍ, ໂດຍລະບຸວ່າ "ເປັນຂ່າວປອມ" ພ້ອມຊີ້ແຈງຕື່ມວ່າ ທະຫານກຳປູເຈຍທີ່ຖືກຈັບໂຕໄປນັ້ນ ໄດ້ຮັບການປະຕິບັດຢ່າງມີມະນຸດສະທຳ, ທັງໄດ້ຮັບການປິ່ນປົວທາງການແພດ, ແລະ ສົ່ງຕົວກັບຄືນປະເທດຢ່າງໂປ່ງໃສ
thaigov.go.thnationthailand.

## ຂໍ້ມູນບິດເບືອນ:

• **ສິ່ງທີ່ເກີດຂຶ້ນ:** ມີວິດີໂອຕັດຕໍ່ຖືກເຜີຍແຜ່ທາງອອນລາຍ ໂດຍສະແດງໃຫ້ເຫັນການເຄື່ອນໄຫວທີ່ມີລັກສະນະຄ້າຍຄືການໂຈມຕີທາງອາກາດຂອງໄທຕໍ່ກໍາລັງທະຫານກໍາປູເຈຍ, ແຕ່ຄວາມຈິງແມ່ນພາບສົງຄາມຣັດເຊຍ-ອູແກຣນ.

• **ແຫຼ່ງຂໍ້ມູນ:** ອີງຕາມການຢືນຢັນໂດຍ **Thai PBS** ເປີດເຜີຍວ່າ ຄລິບດັ່ງກ່າວຖືກນໍາມາເຜີຍແຜ່ຊໍ້າຄືນໃໝ່ ແລະ ເຮັດໃຫ້ເຂົ້າໃຈຜິດ, ພ້ອມຢືນຢັນວ່າ ບໍ່ໄດ້ເກີດຈາກຂໍ້ຂັດແຍ້ງ ລະຫວ່າງ ໄທ ກັບ ກໍາປູເຈຍ
FULCRUMThai **PBS.**

## ຂໍ້ມູນທີ່ເຮັດໃຫ້ເຂົ້າໃຈຜິດ:

• **ສິ່ງທີ່ເກີດຂຶ້ນ:** ມີລາຍງານຂ່າວຈາກແຫຼ່ງຂ່າວທີ່ເຊື່ອຖືໄດ້ວ່າ ທະຫານໄທຫຼາຍຄົນໄດ້ຮັບບາດເຈັບຈາກລະເບີດຝັງດິນຕາມເຂດຊາຍແດນ, ນໍາໄປສູ່ການກ່າວຫາຫຼາຍປະເດັນວ່າ ລະເມີດສົນທິສັນຍາ. ທາງການໄທຕັ້ງຂໍ້ກ່າວຫາວ່າ ກໍາປູເຈຍເປັນຜູ້ວາງລະເບີດຝັງດິນດັ່ງກ່າວ, ຂະນະທີ່ກໍາປູເຈຍຢືນຢັນວ່າລະເບີດຝັງດິນເຫຼົ່ານີ້ເປັນເສດລະເບີດທີ່ຕົກຄ້າງມາແຕ່ປາງສົງຄາມ. ເຖິງແມ່ນເຫດການດັ່ງກ່າວຈະເກີດຂຶ້ນຈິງ, ແຕ່ກໍຖືກໃຊ້ເປັນເຄື່ອງມືໃນການເພີ່ມທະວີຄວາມຕຶງຄຽດໄດ້.

• **ແຫຼ່ງຂໍ້ມູນ:** ການລາຍງານຈາກສໍານັກຂ່າວ Reuters, The Guardian, ແລະ AP ໄດ້ຢືນຢັນເຫດການດັ່ງກ່າວ ລວມທັງໃຫ້ຂໍ້ມູນຈາກຝ່າຍທີ່ມີມຸມມອງກົງກັນຂ້າມ:

  • ສໍານັກຂ່າວ Reuters ລະບຸລາຍລະອຽດກ່ຽວກັບຂໍ້ກ່າວຫາຂອງໄທ ແລະ ການປະຕິເສດຂອງກໍາປູເຈຍ ກ່ຽວກັບລະເບີດຝັງດິນ
  Reuters+1,

  • **The Guardian** ລາຍງານກ່ຽວກັບອາການບາດເຈັບຂອງທະຫານ ແລະ ປະຫວັດການເກັບກູ້ລະເບີດຝັງດິນຂອງກໍາປູເຈຍ
  The Guardian,

  • AP News ລາຍງານທັງອາການບາດເຈັບຂອງທະຫານໄທ ແລະ ການປະຕິເສດຂອງກໍາປູເຈຍ ກ່ຽວກັບການວາງລະເບີດຝັງດິນໃໝ່
  apnews.com.

## ການປະຕິບັດຕາມມາດຕະຖານລາຍງານ:

- ກວດສອບກັບ**ແຫຼ່ງຂໍ້ມູນອິດສະຫຼະ ຢ່າງໜ້ອຍ 2 ແຫຼ່ງ**
- ລະບຸ**ບໍລິບົດທີ່ຊັດເຈນ** ສຳລັບຄຳອ້າງອີງ, ຮູບພາບ ແລະ ວິດີໂອ
- ຫາກບໍ່ໝັ້ນໃຈ, ຄວນລະບຸຢ່າງຊັດເຈນວ່າ ຍັງບໍ່ທັນໄດ້ຮັບການກວດສອບຄວາມຖືກຕ້ອງ

ການຮູ້ຈັກພິຈາລະນາຄວາມແຕກຕ່າງເຫຼົ່ານີ້ ຈະຊ່ວຍໃຫ້ນັກຂ່າວສາມາດຕອບສະໜອງການລາຍງານຂ່າວແຕ່ລະປະເພດໄດ້ຢ່າງຖືກຕ້ອງ, ແລະ ຊ່ວຍຫຼຸດຜ່ອນການແຜ່ກະຈາຍຂອງເນື້ອໃນທີ່ເຮັດໃຫ້ເຂົ້າໃຈຜິດ, ບິດເບືອນ ຫຼື ກໍ່ໃຫ້ເກີດອັນຕະລາຍ.

## ການລາຍງານຂ່າວຂອງທ່ານ
## ມີອິດທິພົນຕໍ່ຄຳຄິດເຫັນ ແລະ
## ຄວາມເຊື່ອໝັ້ນຂອງສາທາລະນະຊົນ.

# X. ການກວດສອບອິດທິພົນຈາກຕ່າງປະເທດ: FIO & FIMI

ບາງຄັ້ງ, ກໍມີອິດທິພົນຈາກພາຍນອກ ທີ່ອາດພະຍາຍາມຊັກຈູງຄໍາຄິດເຫັນສາທາລະນະຊົນ ຫຼື ປັ້ນແຕ່ງຄວາມແຕກແຍກໂດຍທີ່ພວກເຮົາບໍ່ຮູ້ສຶກໂຕ.

ການເຄື່ອນໄຫວທີ່ມີອິດທິພົນຈາກຕ່າງປະເທດເຫຼົ່ານີ້ອາດມີຂຶ້ນນັບແຕ່ຄວາມພະຍາຍາມແບບງຽບໆ ແລະ ຢູ່ເບື້ອງຫຼັງ ໄປຈົນຮອດປະຕິບັດການຂະໜາດໃຫຍ່ ໂດຍມັກໃຊ້ຂໍ້ມູນເທັດ, ບັນຊີປອມ, ຫຼື ຮູບພາບທີ່ປັບແຕ່ງຂຶ້ນເພື່ອກໍານົດກຸ່ມເປົ້າໝາຍສະເພາະ.

ການສ້າງຄວາມເຂົ້າໃຈກ່ຽວກັບ ປະຕິບັດການຂໍ້ມູນຂ່າວສານຈາກຕ່າງປະເທດ (FIO) ແລະ ການແຊກແຊງສື່ ແລະ ຂໍ້ມູນໂດຍຕ່າງປະເທດ (FIMI) ຊ່ວຍໃຫ້ປະຊາຊົນ ແລະ ນັກຂ່າວສາມາດຮັບຮູ້ຍຸດທະວິທີເຫຼົ່ານັ້ນ ແລະ ດໍາເນີນການຕໍ່ຕ້ານໄດ້.

## ປະຕິບັດການຂໍ້ມູນຂ່າວສານຈາກຕ່າງປະເທດ (FIO):

ຄວາມພະຍາຍາມຂອງຄົນຕ່າງປະເທດ ໃນການສ້າງຄໍາຄິດເຫັນພາຍໃນປະເທດອື່ນຜ່ານຂໍ້ມູນເທັດ ຫຼື ຂໍ້ມູນທີ່ເຮັດໃຫ້ເຂົ້າໃຈຜິດ.

## ການແຊກແຊງສື່ ແລະ ຂໍ້ມູນໂດຍຕ່າງປະເທດ (FIMI):

FIMI ໝາຍເຖິງ ຄວາມພະຍາຍາມທີ່ໄດ້ຮັບການສະໜັບສະໜູນຈາກຜູ້ມີອໍານາດ ຫຼື ມີຄວາມເຊື່ອມໂຍງກັບຜູ້ມີອານາດ ເຊິ່ງບິດເບືອນຂໍ້ມູນເພື່ອທໍາລາຍຂະບວນການປະຊາທິປະໄຕ, ສ້າງຄວາມແຕກແຍກ ຫຼື ທໍາລາຍຄວາມເຊື່ອໝັ້ນຂອງປະຊາຊົນ. FIMI ແຕກຕ່າງຈາກຂໍ້ມູນບິດເບືອນທົ່ວໄປ, ເນື່ອງຈາກມີລັກສະນະດັ່ງນີ້:

- **ຜູ້ກະທໍາ ຫຼື ບຸກຄົນທີ່ຂຶ້ນກັບຜູ້ມີອໍານາດ:** ລັດຖະບານ ຫຼື ອົງການຈັດຕັ້ງທີ່ໄດ້ຮັບການສະໜັບສະໜູນຈາກຜູ້ມີອໍານາດ.

- **ການດໍາເນີນງານຢ່າງເປັນລະບົບ:** ມີການວາງແຜນ ແລະ ດໍາເນີນງານໂດຍເຈຕະນາ.

- **ຍຸດທະສາດການບິດເບືອນ:** ໃຊ້ຍຸດທະສາດເພື່ອຊັກຈູງ-ຫຼອກລວງ ຫຼື ເຮັດໃຫ້ເຂົ້າໃຈຜິດ.

- **ມີຈຸດປະສົງທີ່ເປັນອັນຕະລາຍ:** ມຸ່ງທໍາລາຍຄ່ານິຍົມ ແລະ ຂະບວນການປະຊາທິປະໄຕ.

ການດຳເນີນການເຫຼົ່ານີ້ມັກກ່ຽວຂ້ອງກັບວິທີການທີ່ສັບຊ້ອນ ເຊັ່ນ ເວັບໄຊປອມ, ປະຫວັດສື່ສັງຄົມອອນລາຍປອມ, ແລະ ສື່ທີ່ຖືກປອມແປງເພື່ອສ້າງຄວາມສັບສົນ ແລະ ຄວາມບໍ່ເຊື່ອໝັ້ນ. ໜ່ວຍງານກິດຈະການຕ່າງປະເທດຂອງເອີຣົບ (EEAS) ໄດ້ກຳນົດຄຳນິຍາມ FIMI ວ່າເປັນ "ຮູບແບບພຶດຕິກຳສ່ວນໃຫຍ່ທີ່ບໍ່ຜິດກົດໝາຍ" ເຊິ່ງເຮັດໃຫ້ກາຍເປັນໄພຄຸກຄາມຕໍ່ສັງຄົມ ແລະ ສະຖາບັນປະຊາທິປະໄຕ. ຄວາມສັບຊ້ອນຂອງ FIMI ເຮັດໃຫ້ເກີດຄວາມຫຍຸ້ງຍາກໃນການຕອບໂຕ້, ເຊິ່ງຮຽກຮ້ອງໃຫ້ມີການຮັບມືຮອບດ້ານ ແລະ ຮ່ວມມືກັນຂອງຫຼາຍຝ່າຍ. (EU DisinfoLab)

**ຂໍ້ມູນເພີ່ມຕື່ມ:** ເພື່ອຮັບປະກັນຄວາມເຂົ້າໃຈຢ່າງເລິກເຊິ່ງຫຼາຍຂຶ້ນ, ທ່ານສາມາດຄົ້ນຄວ້າແຜລດຟອມ FIMI-ISAC, ເຊິ່ງຈະຊ່ວຍສົ່ງເສີມການແບ່ງປັນຂໍ້ມູນ ແລະ ການວິເຄາະ ເພື່ອຕໍ່ສູ້ກັບໄພຄຸກຄາມຈາກ FIMI.

### ເຄື່ອງມືກວດກາການບິດເບືອນຂໍ້ມູນຈາກຕ່າງປະເທດ:

- ລາຍງານຈາກ **Graphika - graphika.com**
- ຖານຂໍ້ມູນ **EUvsDisinfo - euvsdisinfo.eu**
- **NewsGuard - newsguardtech.com**

**ຄວນກວດສອບກ່ອນອ້າງອີງ**ຂໍ້ມູນທີ່ແຜ່ກະຈາຍຢ່າງວ່ອງໄວ, ລວມທັງພາບໜ້າຈໍ ຫຼື ເວັບໄຊ ໃນໄລຍະທີ່ລະອຽດອ່ອນ ເຊັ່ນ ການເລືອກຕັ້ງ, ການປະທ້ວງ, ຫຼື ເຫດການວິກິດ ເປັນຕົ້ນ.

ການເຝົ້າຕິດຕາມການບິດເບືອນຂໍ້ມູນຂອງຕ່າງປະເທດ ໝາຍເຖິງ ການເຂົ້າໃຈຂໍ້ມູນ ແລະ ນຳໃຊ້ເຄື່ອງມືກວດສອບຂໍ້ມູນທີ່ເຊື່ອຖືໄດ້ ໂດຍສະເພາະໃນໄລຍະສຳຄັນ ເຊັ່ນ ການເລືອກຕັ້ງ, ການປະທ້ວງ, ຫຼື ເຫດການວິກິດ ເປັນຕົ້ນ; ນັກຂ່າວທີ່ເພິ່ງພາແຫຼ່ງຂໍ້ມູນທີ່ເຊື່ອຖືໄດ້ ສາມາດຊ່ວຍຈຳກັດການແຜ່ກະຈາຍຂອງຂໍ້ມູນບິດເບືອນ ແລະ ປົກປ້ອງການສື່ສານສາທາລະນະຊົນໄດ້ຢ່າງກົງໄປກົງມາ ແລະ ເປີດເຜີຍ.

## 1. ພຶດຕິກຳຮ່ວມກັນໃນການສ້າງຄວາມເຂົ້າໃຈຜິດກ່ຽວກັບຕົວຕົນ (CIB) ແມ່ນຫຍັງ?

CIB ເກີດຂຶ້ນເມື່ອກຸ່ມບັນຊີປອມ ຫຼື ຫຼອກລວງ**ຮ່ວມມືກັນເພື່ອຫລອກລວງຜູ້ຄົນ ຫຼື ບິດເບືອນ**ການສື່ສານທາງອອນລາຍ.

### ສັນຍານເຕືອນຂອງ CIB:

- ບັນຊີສື່ສັງຄົມອອນລາຍຫຼາຍສິບລາຍການ ສົ່ງຂໍ້ຄວາມທີ່ມີເນື້ອໃນດຽວກັນ.
- ບັນຊີທີ່ບໍ່ມີຮູບປະຫວັດ ຫຼື ປະຫວັດຕົວຈິງ.
- ກະແສທີ່ເກີດຂຶ້ນກະທັນຫັນໂດຍບໍ່ມີແຫຼ່ງທີ່ມາຊັດເຈນ.

## ຕົວຢ່າງ CIB ໃນຂໍ້ຂັດແຍ້ງທາງອອນລາຍລະຫວ່າງໄທ ກັບ ກຳປູເຈຍ

- **ການບິດເບືອນແຮັສແທັກ:** ກອງທັບໄທມີການສົ່ງເສີມການໃຊ້ແຮັສແທັກ ເຊັ່ນ #ไทยนี้รักสงบแต่ถึงรบไม่ขลาด ("ໄທຮັກຄວາມສະຫງົບແຕ່ບໍ່ຂີ້ຢ້ານອ່ອນແອ") ເພື່ອປຸກກະແສຊາດນິຍົມ ແລະ ນຳສະເໜີພາບລັກທີ່ວ່າ ຝ່າຍກຳປູເຈຍເປັນຜູ້ຮຸກຮານ.
FULCRUM

- **ວິດີໂອ ແລະ ຮູບພາບປອມ:** ສື່ກຳປູເຈຍມີການເຜີຍແຜ່ວິດີໂອປອມກ່ຽວກັບການໂຈມຕີທາງອາກາດຂອງໄທ, ເຊິ່ງຄວາມຈິງແລ້ວແມ່ນພຽງແຕ່ນຳເອົາວິດີໂອຈາກສົງຄາມຣັດເຊຍ-ອູແກຣນມາໃຊ້ຄືນໃໝ່, ເພື່ອສະແດງໃຫ້ເຫັນວ່າ ເຮືອບິນໄທຖືກຍິງຕົກ.
FULCRUM+1

- **ການປອມແປງຕົວຕົນ ແລະ ບັນຊີປອມ:** ທັງສອງຝ່າຍຖືກກ່າວຫາວ່າສ້າງບັນຊີຂ່າວປອມ ໂດຍປອມໂຕເປັນນັກຂ່າວ ຫຼື ພົນລະເມືອງທີ່ເປັນກາງ ເພື່ອເຜີຍແຜ່ຂໍ້ມູນບິດເບືອນ ແລະ ມີອິດທິພົນຕໍ່ການຮັບຮູ້ຂອງປະຊາຊົນ.
Facebook+2KhaosodEnglish+2

ຍຸດທະວິທີເຫຼົ່ານີ້ສະແດງໃຫ້ເຫັນວ່າ ແຜລດຟອມດິຈິຕອນສາມາດຖືກນຳໄປໃຊ້ເປັນອາວຸດ ເພື່ອບິດເບືອນຄວາມຈິງ ແລະ ບິດເບືອນຄຳຄິດເຫັນຂອງສາທາລະນະຊົນໃນໄລຍະທີ່ເກີດຂໍ້ຂັດແຍ້ງ.

### ວິທີກວດສອບເຄືອຂ່າຍທີ່ໜ້າສົງໄສ:

- ໃຊ້ເຄື່ອງມື ເຊັ່ນ **CrowdTangle** (ສຳລັບຕິດຕາມກວດສອບ Facebook / Instagram)
- ໃຊ້ **Hoaxy** - hoaxy.osome.iu.edu ສຳລັບວິເຄາະ Twitter/X

- ການຄົ້ນຫາດ້ວຍຮູບພາບ ໂດຍໃຊ້ **Google Images** ຫຼື **TinEye**

crowdtangle HOAXY beta Visualize the spread of claims and fact checking. TinEye

## 2. ເຫດຜົນທີ່ການກວດສອບຄວາມຈິງມີຄວາມສຳຄັນຕໍ່ນັກຂ່າວ

ການລາຍງານຂ່າວຂອງທ່ານ**ມີອິດທິພົນຕໍ່ຄຳຄິດເຫັນ ແລະ ຄວາມເຊື່ອໝັ້ນຂອງສາທາລະນະຊົນ.**

### ຫາກທ່ານລາຍງານຂໍ້ມູນບໍ່ຖືກຕ້ອງ:

- ທ່ານອາດຈະທຳລາຍຊີວິດ ຫຼື ຊື່ສຽງຂອງຄົນໃດຄົນໜຶ່ງ.
- ທ່ານອາດຊ່ວຍເຜີຍແຜ່ໂຄສະນາຊວນເຊື່ອ ຫຼື ສ້າງຄວາມຕື່ນຕົກໃຈ.
- ທ່ານອາດສ່ຽງຕໍ່ການສູນເສຍຄວາມເຊື່ອໝັ້ນຈາກຜູ້ອ່ານ.

ແຕ່ຖ້າທ່ານມີການກວດສອບຄວາມຖືກຕ້ອງ, ມີການອະທິບາຍ ແລະ ຮັກສາຄວາມໂປ່ງໃສ:

- ທ່ານໄດ້ຊ່ວຍໃຫ້ຜູ້ຊົມສາມາດເຂົ້າໃຈແຈ້ງເຖິງຄວາມຈິງ.
- ທ່ານໄດ້ຊ່ວຍເສີມສ້າງບົດບາດຂອງນັກຂ່າວໃນສັງຄົມ.
- ທ່ານຊ່ວຍປົກປ້ອງປະຊາທິປະໄຕ ແລະ ຄວາມປອດໄພຂອງສາທາລະນະຊົນ.



# XI. ວິທີຝຶກອົບຮົມທີມງານກ່ຽວກັບການກວດສອບຄວາມຈິງ

ກ່ອນທີ່ນັກຂ່າວຈະຄາດຫວັງໃຫ້ເພື່ອນຮ່ວມງານກວດສອບຄວາມຈິງໃຫ້ດີໄດ້, ພວກເຂົາຕ້ອງໄດ້ເຮັດໃຫ້ທີມງານເຫັນກ່ອນວ່າ "ຍ້ອນຫຍັງປະເດັນນີ້ຈຶ່ງມີຄວາມສາຄັນ".

ກອງບັນນາທິການບໍ່ສາມາດເຮັດວຽກໂດຍອາໄສການຄາດເດົາໄດ້ໃນໄລຍະຍາວ ຫຼື ຖ້າເຮັດໄດ້ກໍພຽງເວລາສັ້ນໆ. ຄວາມຖືກຕ້ອງແມ່ນຕົ້ນທຶນ, ແລະຄວາມເຊື່ອໝັ້ນກໍແມ່ນຊື່ສຽງຂອງທ່ານ. ເມື່ອສອງສິ່ງນີ້ສູນເສຍໄປແລ້ວ, ກໍຍາກທີ່ຈະກູ້ຄືນມາໄດ້.

ນີ້ແມ່ນເຫດຜົນທີ່ການກວດສອບຄວາມຈິງບໍ່ຄວນເປັນພຽງ "ຂັ້ນຕອນທີ່ອາດຈະເຮັດ ຫຼື ບໍ່ເຮັດກໍໄດ້" ແຕ່ຄວນເປັນສິ່ງທີ່ຕ້ອງກະທຳໂດຍອັດຕະໂນມັດກ່ອນທີ່ທ່ານຈະກົດເຜີຍແຜ່ສູ່ສາທາລະນະຊົນ. ລອງຄຳນຶງໃສ່ການຝຶກໃຊ້ເຄື່ອງມືຂອງທ່ານກ່ອນເລີ່ມຕົ້ນສ້າງຜົນງານ, ເພື່ອປ້ອງກັນບໍ່ໃຫ້ເກີດບັນຫາຜິດພາດໃນພາຍຫຼັງ.

ການກວດສອບຄວາມຈິງຖືເປັນພື້ນຖານສຳຄັນທີ່ເຂັ້ມແຂງຂອງກອງບັນນາທິການ. ມີຄວາມຈຳເປັນຕ້ອງໄດ້ປະຕິບັດຢ່າງສະໝ່ຳສະເໝີ ເພື່ອຮັບປະກັນປະສິດທິພາບ, ຄວາມຖືກຕ້ອງຄົບຖ້ວນ ແລະຄວາມເຊື່ອໝັ້ນຈາກຜູ້ອ່ານ. ເພື່ອສ້າງພຶດຕິກຳດັ່ງກ່າວ, ຄວນເຮັດໃຫ້ການກວດສອບຄວາມຈິງກາຍເປັນມາດຕະຖານຂອງຂ່າວທຸກບົດ, ໂດຍທີມງານໃນກອງບັນນາທິການທຸກຄົນ ຈະຕ້ອງປະຕິບັດວິທີດຽວກັນເຊິ່ງເປັນວິທີງ່າຍໆ ແລະ ໄວ.

ເມື່ອມີຂ່າວເຜີຍແຜ່ໃນສື່ສັງຄົມອອນລາຍ, ຄວນແນະນຳເພື່ອນຮ່ວມງານຂອງທ່ານໃຫ້ປະຕິບັດຕາມຂັ້ນຕອນລຸ່ມນີ້:

### 1. ກວດສອບແຫຼ່ງຂໍ້ມູນ

- ລະບຸວ່າແມ່ນໃຜເປັນຄົນສົ່ງ. ບຸກຄົນ ຫຼື ບັນຊີນີ້ມີຄວາມໜ້າເຊື່ອຖື ຫຼື ບໍ່.

### 2. ກວດສອບເນື້ອໃນ

- ກວດສອບພາບ ແລະ ຄຳຄິດເຫັນໂດຍລະອຽດ. ຊອກຫາແຫຼ່ງທີ່ມາກ່ຽວກັບເວລາ, ວັນທີ, ແລະ ສະຖານທີ່.

### 3. ກວດສອບການຢືນຢັນຄວາມຖືກຕ້ອງ

- ຄົ້ນຫາບັນຊີ ຫຼື ສຳນັກຂ່າວອື່ນໆ ເພື່ອກວດເບິ່ງວ່າ ຂໍ້ມູນກົງກັນ ຫຼື ບໍ່.

### 4. ຕິດຕໍ່ໜ່ວຍງານທີ່ກ່ຽວຂ້ອງ

- ຕິດຕໍ່ພະນັກງານ, ໜ່ວຍງານ, ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງກັບເຫດການ.

### 5. ຢ້ຽມຊົມພື້ນທີ່ເກີດເຫດ (ຖ້າເປັນໄປໄດ້)

- ສົ່ງທີມງານນັກຂ່າວຄົນໃດໜຶ່ງໄປພື້ນທີ່ເກີດເຫດເພື່ອຢືນຢັນສະຖານະການດ້ວຍຕົນເອງ.

### ໝາຍເຫດ:

ດ້ວຍຂໍ້ຈຳກັດດ້ານຮູບພາບ ແລະ ຂໍ້ມູນໃນລາວ, ເຮັດໃຫ້ເຄື່ອງມືຕ່າງໆ ເຊັ່ນ Google Lens ມີປະສິດທິພາບໃນການຕິດຕາມແຫຼ່ງທີ່ມາຂອງຮູບພາບໄດ້ໃນລະດັບຕ່ຳ.

**ຕົວຢ່າງທີ່ໃຊ້ໃນການຝຶກອົບຮົມ**ສະຖານະການທົ່ວໄປທີ່ກ່ຽວຂ້ອງກັບຮູບພາບ ຫຼື ວິດີໂອບັນທຶກເຫດການໄຟໄໝ້ເສົາໄຟຟ້າແຄມທາງ. ເນື້ອໃນປະເພດນີ້ ມັກໄດ້ຮັບການແຜ່ກະຈາຍຢ່າງວ່ອງໄວ ແລະ ນັກຂ່າວອາດຮູ້ສຶກກົດດັນໃຫ້ມີການເຜີຍແຜ່ຂ່າວສູ່ສາທາລະນະຊົນຢ່າງວ່ອງໄວ. ຢ່າງໃດກໍຕາມ, ກ່ອນການເຜີຍແຜ່ທຸກຄັ້ງນັກຂ່າວຄວນ:

## 1. ຄົ້ນຫາຕາມສະຖານທີ່

ໃຊ້ຄຳຫຼັກ ເຊັ່ນ ຊື່ບ້ານ, ເມືອງ, ຊື່ຖະໜົນ, ສະຖານທີ່ສຳຄັນທີ່ຢູ່ໃກ້ຄຽງ, ຫຼື "ໄຟໄໝ້" ເພື່ອກວດສອບວ່າເຫດການຫາກເກີດຂຶ້ນ ຫຼື ບໍ?

## 2. ຢືນຢັນລາຍລະອຽດສະເພາະ

ລະບຸຊື່ສະຖານທີ່ເຕັມ, ກວດສອບຈຸດທີ່ແນ່ນອນ, ແລະ ຢືນຢັນຊ່ວງໄລຍະເກີດເຫດການ.

## 3. ປະເມີນສະຖານະການ

ກວດສອບວ່າມີຄວາມເສຍຫາຍ, ມີຜູ້ບາດເຈັບ, ແລະ ທີມງານກູ້ໄພ ແລະ ດັບເພີງມາຮອດແລ້ວ ຫຼື ບໍ?.

ເມື່ອກວດສອບລາຍລະອຽດທັງໝົດແລ້ວ, ທີມງານຈະສາມາດເຜີຍແຜ່ຂ່າວດັ່ງກ່າວໄດ້ຢ່າງໝັ້ນໃຈ, ໂດຍຮັບປະກັນວ່າຂ່າວນັ້ນຖືກຕ້ອງ ແລະ ທັນຕາມເວລາ.

ທ້າຍສຸດນີ້, ການກວດສອບຄວາມຈິງບໍ່ໄດ້ໝາຍເຖິງຄວາມຈຳເປັນທີ່ຈະຕ້ອງສົງໄສໃນທຸກສິ່ງ ແຕ່ໝາຍເຖິງການໃຫ້ກຽດຜູ້ອ່ານຫຼາຍກວ່າ.

ທ່ານກຳລັງບອກວ່າ, "ຂ້າພະເຈົ້າໃຫ້ຄຸນຄ່າໃນຄວາມເຊື່ອໝັ້ນຂອງພວກທ່ານຫຼາຍເປັນພິເສດ ຈຶ່ງຈຳເປັນຕ້ອງໄດ້ກວດສອບເພື່ອຮັບປະກັນວ່າ ຂ່າວນີ້ເປັນຄວາມຈິງ ກ່ອນຈະນຳມາເຜີຍແຜ່". ເມື່ອທ່ານເຮັດໃຫ້ໜ້າວຽກນີ້ກາຍເປັນສ່ວນໜຶ່ງຂອງວັດທະນະທຳໃນກອງບັນນາທິການຂອງທ່ານ, ສະແດງວ່າທ່ານບໍ່ໄດ້ເຮັດໜ້າທີ່ພຽງຝຶກຝົນນັກຂ່າວໃຫ້ເກັ່ງຂຶ້ນເທົ່ານັ້ນ, ແຕ່ທ່ານກຳລັງສ້າງຂົວເຊື່ອມຕໍ່ທີ່ເຂັ້ມແຂງລະຫວ່າງໜ້າວຽກຂອງທ່ານກັບຜູ້ຄົນທີ່ເພິ່ງພາໜ້າວຽກນັ້ນ, ແລະ ໃນວົງການສື່ມວນຊົນ, ຂົວເຊື່ອມຕໍ່ແຫ່ງຄວາມເຊື່ອໝັ້ນນີ້ ກໍແມ່ນທຸກສິ່ງທຸກຢ່າງນັ້ນເອງ.

# XII. ວິທີລາຍງານບັນຊີປອມ ໃນສື່ສັງຄົມອອນລາຍ

ພູມມິທັດສື່ສຳລັບນັກຂ່າວ ແມ່ນເປັນທັງເຄື່ອງມືທີ່ເຕັມໄປດ້ວຍພະລັງ ແລະ ອາດເປັນສະໜາມລະເບີດຝັງດິນ. ບັນຊີປອມ ແລະ ໜ້າຂ່າວປອມສາມາດເຜີຍແຜ່ຂໍ້ມູນເທັດ, ທຳລາຍກຽດຊື່ສຽງ ຫຼື ເອົາລັດເອົາປຽບຜູ້ຊົມທາງການເງິນ.

ການສອນນັກຂ່າວໃຫ້ຮູ້ຈັກກຳນົດ ແລະ ລາຍງານບັນຊີເຫຼົ່ານີ້ ຊ່ວຍໃຫ້ສາມາດຮັບປະກັນໄດ້ວ່າ ກອງບັນນາທິການມີຄວາມຫ້າວຫັນໃນໜ້າທີ່ວຽກງານ, ຊ່ວຍປົກປ້ອງທັງເນື້ອໃນ ແລະ ສາທາລະນະຊົນ. ເມື່ອນັກຂ່າວຫຼາຍຄົນຮ່ວມມືກັນ ກໍຈະເຮັດໃຫ້ການລາຍງານຂ່າວມີປະສິດທິພາບຫຼາຍຂຶ້ນ, ແລະ ແຜລດຟອມຕ່າງໆກໍມີທ່າອ່ຽງທີ່ຈະດຳເນີນການຢ່າງວ່ອງໄວ.

## ແນວທາງການດຳເນີນງານຕາມລຳດັບຂັ້ນຕອນ ການລາຍງານເພຈ Facebook ປອມ










**1.** ໄປທີ່ໜ້າຂ່າວ.

**2.** ໄປທີ່ ແຕະສາມຈຸດ (···) ຢູ່ລຸ່ມຮູບພາບໜ້າປົກ.

**3.** ເລືອກລາຍງານໜ້າ (Report Page).

**4.** ເລືອກເຫດຜົນ (ເຊັ່ນ ປະຫວັດປອມ, ການປອມຕົວ,ຂໍ້ມູນເທັດ)

**5.** ສົ່ງລາຍງານ.

**ຄຳແນະນຳພິເສດ:** ຫາກໜ້າຂ່າວ ເພຈປອມອ້າງວ່າເປັນສານັກຂ່າວເພື່ອຂາຍຜະລິດຕະພັນຄຸນນະພາບຕໍ່າ ຫຼື ຫຼອກລວງຜູ້ບໍລິໂພກໃຫ້ເສຍເງິນ, ໃຫ້ເລືອກໝວດທຸລະກິດ (Business). ການເລືອກແບບນີ້ ຈະຊ່ວຍດຶງດູດຄວາມສົນໃຈຈາກ Meta ແລະ ເພີ່ມໂອກາດໃຫ້ໜ້າດັ່ງກ່າວຖືກລົບອອກຢ່າງວ່ອງໄວ.









## ການລາຍງານບັນຊີປອມ (ແອັບ ຫຼື ເວັບໄຊ)

**1.** ໄປທີ່ປະຫວັດ (profile).
**2.** ແຕະ “Share” (ແບ່ງປັນ) ຫຼື “Options” (ຕົວເລືອກ).
**3.** ແຕະ “Report” (ບັນຊີ)
→ ເລືອກ “Report account” (ລາຍງານບັນຊີ).
**4.** ເລືອກເຫດຜົນ ແລ້ວສົ່ງ.

**ຕົວຢ່າງ:** ຫາກມີຄົນແອບອ້າງເປັນຊ່ອງຂ່າວຂອງທ່ານ, ຫຼື ອັບໂຫຼດວິດີໂອຊ້ຳ, ຫຼື ລະເມີດລິຂະສິດ, ໃຫ້ເລືອກເຫດຜົນທີ່ເໝາະສົມໃນລາຍການລາຍງານ.



ການສ້າງນິດໄສໃນການລາຍງານບັນຊີປອມ ບໍ່ໄດ້ພຽງສະເພາະໜ້າວຽກທາງວິຊາການເທົ່ານັ້ນ, ແຕ່ຍັງເປັນສ່ວນໜຶ່ງຂອງຄວາມຮັບຜິດຊອບຂອງນັກຂ່າວໃນການຮັກສາຄວາມເຊື່ອໝັ້ນ ແລະ ຄວາມໜ້າເຊື່ອຖື.

ດ້ວຍການໃຫ້ຄວາມຮູ້ກ່ຽວກັບທັກສະດັ່ງກ່າວຢ່າງເປັນລະບົບ, ກອງບັນນາທິການຈະສາມາດເສີມສ້າງຄວາມເຂັ້ມແຂງໃຫ້ແກ່ທີມງານໃນການດຳເນີນການຢ່າງວ່ອງໄວ ເພື່ອປ້ອງກັນການແອບອ້າງ ແລະ ຂໍ້ມູນເທັດ, ເຊິ່ງຈະຊ່ວຍເພີ່ມທະວີຄວາມຊື່ສັດສຸດຈະລິດໃນການລາຍງານ ແລະ ປົກປ້ອງສາທາລະນະຊົນໃຫ້ຫຼຸດພົ້ນຈາກການຫຼອກລວງໄດ້.

# ບົດຝຶກຫັດໂດຍຫຍໍ້ ສຳລັບນັກຂ່າວກ່ຽວກັບຄວາມຖືກຕ້ອງຄົບຖ້ວນຂອງຂໍ້ມູນ

## 1. ຄວາມຖືກຕ້ອງຄົບຖ້ວນຂອງຂໍ້ມູນ

**ບົດຝຶກຫັດ:** ຄົ້ນຫາບົດຄວາມຫຼ້າສຸດທີ່ທ່ານຂຽນ ຫຼື ກວດແກ້.

- ເນັ້ນໃສ່ຄວາມຈິງ ຫຼື ຄຳອ້າງອີງ 3 ປະເດັນ.
- ກວດສອບແຕ່ລະປະເດັນຄືນອີກຄັ້ງ ໂດຍໃຊ້ແຫຼ່ງຂໍ້ມູນທີ່ເຊື່ອຖືໄດ້ (ເວັບໄຊທາງການ, ຂ່າວປະຊາສຳພັນ, ຫຼື ແພລດຟອມກວດສອບຄວາມຈິງ).
- ຈົດບັນທຶກການປ່ຽນແປງໃດໜຶ່ງທີ່ທ່ານຈະເຮັດ ຖ້າມີການເຜີຍແຜ່ຂໍ້ມູນໃໝ່.

**ເປົ້າໝາຍ:** ສ້າງຄວາມເຄີຍຊິນໃນການກວດສອບຄືນໃໝ່ ເຖິງຈະເຜີຍແຜ່ໄປແລ້ວກໍຕາມ.

## 2. ຂໍ້ມູນເທັດ / ຂໍ້ມູນບິດເບືອນ / ຂໍ້ມູນທີ່ເຮັດໃຫ້ເຂົ້າໃຈຜິດ

**ບົດຝຶກຫັດ:** ອ່ານຂ່າວທີ່ກ່ຽວຂ້ອງກັບຂ່າວໃນສື່ສັງຄົມອອນລາຍທີ່ເປັນກະແສຫຼ້າສຸດ ປະມານ 3 ບົດ.

- ສຳລັບຂ່າວທີ່ສົ່ງແຕ່ລະຄັ້ງ, ຄວນຕັ້ງຄາຖາມວ່າ:

- ຂ່າວນີ້**ແມ່ນຂໍ້ມູນເທັດແຕ່ຖືກແບ່ງປັນໂດຍເຈຕະນາ ຫຼື ບໍ່?** (ຂໍ້ມູນເທັດ).
- ຂ່າວນີ້**ແມ່ນຂໍ້ມູນເທັດ ແລະ ຖືກແບ່ງປັນເພື່ອຫຼອກລວງ**ຜູ້ຄົນ ຫຼື ບໍ່? (ຂໍ້ມູນບິດເບືອນ).
- ຂ່າວນີ້**ແມ່ນຂ່າວແທ້ ແຕ່ເປັນອັນຕະລາຍ ຫຼື ຖືກຕີຄວາມໝາຍໃຫ້ເຂົ້າໃຈຜິດ ຫຼື ບໍ່?** (ຂໍ້ມູນທີ່ເຮັດໃຫ້ເຂົ້າໃຈຜິດ).

- ຂຽນເຫດຜົນສຳລັບຂ່າວທີ່ສົ່ງແຕ່ລະຄັ້ງ.

**ເປົ້າໝາຍ:** ຝຶກຈຳແນກປະເພດຂໍ້ມູນທີ່ເປັນອັນຕະລາຍ.

## 3. ພຶດຕິກຳຮ່ວມກັນໃນການສ້າງຄວາມເຂົ້າໃຈຜິດກ່ຽວກັບຕົວຕົນ (CIB)

**ບົດຝຶກຫັດ:** ເລືອກຫົວຂໍ້ທີ່ກຳລັງໄດ້ຮັບຄວາມນິຍົມໃນ Facebook ຫຼື X (Twitter).

- ອ່ານເນື້ອໃນຂ່າວທີ່ກ່ຽວຂ້ອງປະມານ 10-15 ຂ່າວ. ແລ້ວຕັ້ງຄຳຖາມວ່າ:

    - ບັນຊີໃດໜຶ່ງສົ່ງ**ຂໍ້ຄວາມ ຫຼື ເຊື່ອມຕໍ່ໃສ່ອັນດຽວກັນ ຫຼື ບໍ່?**.
    - ບັນຊີດັ່ງກ່າວເປັນບັນຊີແທ້ ຫຼື ບໍ່ (ຮູບພາບ, ປະຫວັດ, ການເຄື່ອນໄຫວ)?
    - ມີການເຄື່ອນໄຫວເພີ່ມຫຼາຍຂຶ້ນ ຈາກບັນຊີໃໝ່ ຫຼື ບັນຊີທີ່ບໍ່ລະບຸຕົວຕົນ ຫຼື ບໍ່?

- ບັນທຶກສັນຍານທີ່ອາດບົ່ງບອກເຖິງພຶດຕິກຳຮ່ວມກັນ.

**ເປົ້າໝາຍ:** ພັດທະນາສັນຊາດຕະຍານໃນການກວດສອບເຄືອຂ່າຍທີ່ອາດມີການບິດເບືອນ.

## 4. ການລາຍງານຂ່າວຢ່າງມີຄວາມຮັບຜິດຊອບ ແລະ ການກວດສອບຄວາມຈິງ

**ບົດຝຶກຫັດ:** ເລືອກຫົວຂໍ້ຂ່າວ ຫຼື ເນື້ອໃນຂ່າວທີ່ທ່ານຂຽນ ຫຼື ກວດແກ້.

- ລອງລຶບລ້າງຂໍ້ມູນອ້າງອີງທີ່ຜິດ ຫຼື ເກີນຄວາມຈິງດ້ວຍຕົນເອງ ໂດຍໃຊ້ເຄື່ອງມື 3 ປະເພດ ຄື:

    - ການຄົ້ນຫາດ້ວຍຮູບພາບ **(Google Images ຫຼື TinEye)**.
    - ເຄື່ອງມື **Google Fact Check Explorer**
    - ຄົ້ນຫາຄຳເວົ້າ ຫຼື ຄຳອ້າງອີງໃນສຳນັກຂ່າວທີ່ມີຊື່ສຽງ.

- ຈົດບັນທຶກສິ່ງທີ່ກວດສອບໄດ້ຍາກກວ່າທີ່ຄາດຄະເນໄວ້.

**ເປົ້າໝາຍ:** ເສີມສ້າງຂະບວນການກວດສອບຄວາມຈິງສ່ວນຕົວຂອງທ່ານ.

ສາມາດເຮັດບົດຝຶກຫັດເຫຼົ່ານີ້ໄດ້ດ້ວຍຕົນເອງ ຫຼື ໃນກອງປະຊຸມພາກປະຕິບັດຕົວຈິງຂອງກອງບັນນາທິການ.

## ຕົວຢ່າງການກວດສອບຄວາມຈິງຕາມລຳດັບຂັ້ນຕອນ

### ຄຳອ້າງອີງ:

ມີຂ່າວໃນ Facebook ທີ່ກຳລັງເປັນກະແສ ໂດຍລະບຸວ່າ"ເກີດເຫດແຜ່ນດິນໄຫວຄັ້ງໃຫຍ່ ຢູ່ນະຄອນຫຼວງວຽງຈັນ, ສປປ ລາວ, ໃນວັນທີ 6 ສິງຫາ 2025, ເຮັດໃຫ້ອາຄານບ້ານເຮືອນຫຼາຍຫຼັງພັງຖະຫຼົ່ມ".

## ຂັ້ນຕອນທີ 1: ວິເຄາະຄຳອ້າງອີງ

### ຄຳອ້າງອີງ:

- ມີຄຳອ້າງອີງຫຍັງແດ່?
- ເກີດຂຶ້ນເມື່ອໃດ?
- ເກີດຂຶ້ນຢູ່ໃສ?
- ມີໃຜແດ່ໄດ້ຮັບຜົນກະທົບ?

### ອົງປະກອບສຳຄັນທີ່ຕ້ອງໄດ້ກວດສອບ:

- ວັນທີ: 6 ສິງຫາ 2025
- ສະຖານທີ່: ນະຄອນຫຼວງວຽງຈັນ, ສປປ ລາວ
- ເຫດການ: ແຜ່ນດິນໄຫວ
- ຜົນທີ່ຕາມມາ: ອາຄານຖະຫຼົ່ມ

## ຂັ້ນຕອນທີ 2: ກວດສອບແຫຼ່ງຂໍ້ມູນຢ່າງເປັນທາງການ

**ເຄື່ອງມື:** ມີເວັບໄຊຢ່າງເປັນທາງການຂອງລັດຖະບານ ຫຼື ໜ່ວຍງານທີ່ກ່ຽວຂ້ອງ

**ເປົ້າໝາຍ:** ເພື່ອຢືນຢັນວ່າ ມີເຫດການແຜ່ນດິນໄຫວເກີດຂຶ້ນໃນນະຄອນຫຼວງວຽງຈັນ ໃນມື້ນັ້ນ ຫຼື ບໍ່.

**ຜົນການຄົ້ນຫາ:** ບໍ່ມີລາຍງານກ່ຽວກັບເຫດການແຜ່ນດິນໄຫວໃນນະຄອນຫຼວງວຽງຈັນ ຫຼື ບໍລິເວນໃກ້ຄຽງ ໃນວັນທີ 6 ສິງຫາ.

## ຂັ້ນຕອນທີ 3: ການຄົ້ນຫາດ້ວຍຮູບພາບ

ຂ່າວທີ່ພວມເປັນກະແສໂດຍມີຮູບພາບອາຄານຖະຫຼົ່ມ. ມາກວດເບິ່ງວ່າ ຮູບພາບນີ້ແມ່ນຮູບຈິງ ຫຼື ຮູບເກົ່າທີ່ນຳມາສົ່ງຊ້ຳຄືນໃໝ່.

### ເຄື່ອງມື:

- ເຄື່ອງມືຄົ້ນຫາດ້ວຍຮູບພາບຂອງ **Google:** images.google.com
- **TinEye:** tineye.com

**ເປົ້າໝາຍ:** ຄົ້ນຫາແຫຼ່ງທີ່ມາຂອງຮູບພາບຕົ້ນສະບັບ.

**ຜົນການຄົ້ນຫາ:** ຄົ້ນຮູບພາບນີ້ປາກົດຄັ້ງທຳອິດໃນປີ 2021 ຈາກເຫດການແຜ່ນດິນໄຫວໃນອິນໂດເນເຊຍ, ບໍ່ແມ່ນລາວ.

## ຂັ້ນຕອນທີ 4: ການຄົ້ນຫາຈາກຄັງຂໍ້ມູນຂ່າວເກົ່າ ແລະ ແຫຼ່ງຂ່າວທີ່ເຊື່ອຖືໄດ້

### ເຄື່ອງມື:

- ເຄື່ອງມືຄົ້ນຫາ **Google News:** news.google.com
- ຄົ້ນຫາດ້ວຍຄຳຫຼັກ: **earthquake Vientiane August 6 2025**

**ເປົ້າໝາຍ:** ເພື່ອກວດເບິ່ງວ່າ ມີສຳນັກຂ່າວທີ່ມີຊື່ສຽງໃດໜຶ່ງ (ເຊັ່ນໂທລະພາບແຫ່ງຊາດລາວ, ໜັງສືພິມວຽງຈັນທາຍ, AFP, ຣອຍເຕີ) ມີການລາຍງານເຫດການດຽວກັນນີ້ ຫຼື ບໍ່.

**ຜົນການຄົ້ນຫາ:** ບໍ່ມີແຫຼ່ງຂ່າວທີ່ໜ້າເຊື່ອຖືໃດໆ ທີ່ລາຍງານຂ່າວກ່ຽວກັບເຫດການແຜ່ນດິນໄຫວໃນນະຄອນຫຼວງວຽງຈັນໃນມື້ນັ້ນ.

## ຂັ້ນຕອນທີ 5: ກວດສອບແຫ່ງທີ່ມາຂອງຂ່າວ

**ເຄື່ອງມື:** ເຄື່ອງມືກວດສອບປະຫວັດ ສື່ສັງຄົມອອນລາຍ

- ກົດທີ່ປະຫວັດຂອງຜູ້ໂພສໃນ Facebook
- ກວດສອບ: ເປັນບຸກຄົນຕົວຈິງບໍ? ບັນຊີມີປະຫວັດການສົ່ງເນື້ອໃນຂ່າວເທັດ ຫຼື ບໍ່?
- ໃຊ້ເຄື່ອງມື **CrowdTangle** (ຖ້າມີ) ຫຼື **ເຄື່ອງມືກວດສອບບັນຊີ X** ເພື່ອກວດສອບຮູບແບບພຶດຕິກຳ

**ເປົ້າໝາຍ:** ເພື່ອປະເມີນຄວາມໜ້າເຊື່ອຖືຂອງຜູ້ສົ່ງ.

**ຜົນການຄົ້ນຫາ:** ບັນຊີນີ້ຫາກສ້າງຂຶ້ນໃນໄລຍະສອງອາທິດກ່ອນ ແລະ ໄດ້ແບ່ງປັນຂ່າວນັ້ນ ຫຼາຍລາຍການ ທີ່ມີຄຳອ້າງອີງທີ່ໜ້າຕົກໃຈແຕ່ຍັງບໍ່ໄດ້ຮັບການຢືນຢັນຄວາມຖືກຕ້ອງ.

## ຂັ້ນຕອນທີ 6: ຄົ້ນຫາຄວາມເປັນໄປໄດ້ຂອງພຶດຕິກຳຮ່ວມກັນໃນການສ້າງຄວາມເຂົ້າໃຈຜິດ ຫຼື ປັ່ນກະແສ

ຫາກມີຫຼາຍບັນຊີໄດ້ແບ່ງປັນຄຳອ້າງອີງດຽວກັນ...

### ເຄື່ອງມື:

- **Hoaxy (hoaxy.osome.iu.edu)** ເພື່ອຊ່ວຍໃຫ້ສາມາດເຫັນພາບການແຜ່ກະຈາຍຂອງຄຳອ້າງອີງດັ່ງກ່າວ.
- **Botometer (botometer.osome.iu.edu)** ເພື່ອກວດສອບເບິ່ງວ່າ ບັນຊີເຫຼົ່ານີ້ເປັນໂປຣແກຣມອັດຕະໂນມັດ ຫຼື ບໍ່
- **CrowdTangle** (ຫາກເປັນສ່ວນໜຶ່ງຂອງກອງບັນນາທິການ ຫຼື ຄູ່ຮ່ວມມືແຜລດຟອມ)

**ເປົ້າໝາຍ:** ເພື່ອກວດສອບເບິ່ງວ່າປະເດັນນີ້ເປັນສ່ວນໜຶ່ງຂອງການປັ່ນກະແສແບບຮ່ວມມືກັນ ຫຼື ບໍ່.

**ຜົນການຄົ້ນຫາ:** ມີໜ້າ Facebook ທີ່ສ້າງຂຶ້ນໃໝ່ຫຼາຍໜ້າ, ຈະແບ່ງປັນຂ່າວດຽວກັນຫຼາຍຄັ້ງໃນເວລາດຽວກັນ, ເຊິ່ງອາດເປັນສັນຍາບົ່ງຊີ້ເຖິງ **CIB.**

## ຂັ້ນຕອນທີ 7: ການເຜີຍແຜ່ ຫຼື ລາຍງານຂ່າວຢ່າງມີຄວາມຮັບຜິດຊອບ

ຕອນນີ້ທ່ານມີຫຼັກຖານພຽງພໍທີ່ຈະລະບຸວ່າ:

ບໍ່ມີເຫດການແຜ່ນດິນໄຫວເກີດຂຶ້ນຢູ່ນະຄອນຫຼວງວຽງຈັນ ໃນວັນທີ 6 ສິງຫາຜ່ານມາ ຮູບພາບທີ່ໃຊ້ໃນການປະກອບບົດຂ່າວແມ່ນມາຈາກເຫດການແຜ່ນດິນໄຫວໃນອິນໂດເນເຊຍໃນປີ 2021.

ຂ່າວນີ້ປາກົດວ່າຈະເຮັດໃຫ້ເກີດຄວາມເຂົ້າໃຈຜິດ ແລະ ອາດເປັນສ່ວນໜຶ່ງຂອງພຶດຕິກາ

### ທ່ານຄວນລະບຸເນື້ອໃນຂ່າວວ່າ:

**"ບໍ່ມີເຫດການແຜ່ນດິນໄຫວເກີດຂຶ້ນໃນນະຄອນຫຼວງວຽງຈັນ: ຮູບພາບທີ່ເປັນກະແສໄດ້ເຮັດໃຫ້ຜູ້ໃຊ້ສື່ອອນລາຍເຂົ້າໃຈຜິດ"**

**ສະຫຼຸບເຄື່ອງມື:**

| ຈຸດປະສົງ: | ເຄື່ອງມື: |
|---|---|
| • ກວດສອບເຫດການ | • USGS, ກົມອຸຕຸນິຍົມ ແລະ ອຸທົກກະສາດ ລາວ |
| • ກວດສອບຮູບພາບ | • Google Reverse Image, TinEye |
| • ກວດສອບຂ່າວ | • Google News |
| • ຄວາມໜ້າເຊື່ອຖືຂອງແຫຼ່ງຂ່າວ | • ເຄື່ອງມືກວດສອບປະຫວັດ Facebook, CrowdTangle |
| • ພຶດຕິກຳເຄືອຂ່າຍ | • Hoaxy, Botometer |

**ການລະບຸຄຳອ້າງອີງຂອງຜູ້ອື່ນວ່າເປັນເທັດ ທັງທີ່ຄວາມຈິງບໍ່ແມ່ນແນວນັ້ນ, ອາດຖືກ ໂຕ້ແຍ້ງວ່າເປັນການໝິ່ນປະໝາດໄດ້.**

# XIII. ຍ້ອນຫຍັງການກວດສອບຄວາມຈິງ ຈຶ່ງສາມາດປົກປ້ອງທ່ານທາງກົດໝາຍໄດ້

ການກວດສອບຄວາມຈິງບໍ່ພຽງແຕ່ຊ່ວຍໃຫ້ທ່ານສາມາດໄດ້ຮັບຂໍ້ມູນຖືກຕ້ອງຕາມຄວາມຈິງເທົ່ານັ້ນ, ແຕ່ຍັງຊ່ວຍໃຫ້ກອງບັນນາທິການຂອງທ່ານສາມາດຫຼີກເວັ້ນບັນຫາທາງກົດໝາຍໄດ້ນຳອີກ.

ການກວດສອບຄວາມຈິງບໍ່ແມ່ນຄຳແນະນຳທາງກົດໝາຍ, ແຕ່ເປັນຄວາມສ່ຽງທາງກົດໝາຍບາງປະເດັນ ທີ່ການກວດສອບຄວາມຈິງສາມາດຊ່ວຍກວດກາໄດ້ (ສຳລັບກໍລະນີນີ້, ທ່ານອາດຈຳເປັນຕ້ອງໄດ້ປຶກສາທະນາຍຄວາມດ້ານສື່ມວນຊົນ:

## ການໝິ່ນປະໝາດ:

ການເຜີຍແຜ່ຄຳອ້າງອີງທີ່ເປັນເທັດ ແລະ ສ້າງຄວາມເສຍຫາຍແກ່ບຸກຄົນໃດໜຶ່ງ ອາດນຳໄປສູ່ການຮ້ອງຟ້ອງ, ໂດຍສະເພາະຫາກບຸກຄົນດັ່ງກ່າວບໍ່ແມ່ນບຸກຄົນທີ່ມີຊື່ສຽງ.

ການກວດສອບຄວາມຈິງສາມາດກວດສອບຄຳອ້າງອີງທີ່ບໍ່ເປັນຄວາມຈິງ ຫຼື ຍັງບໍ່ຊັດເຈນ ແລະ ຢືນຢັນດ້ວຍແຫຼ່ງຂໍ້ມູນທີ່ເຊື່ອຖືໄດ້.

## ການບຸກລຸກຄວາມເປັນສ່ວນຕົວ:

ຫາກເນື້ອໃນຂ່າວໃດມີການເປີດເຜີຍລາຍລະອຽດສ່ວນຕົວທີ່ບໍ່ເປັນປະໂຫຍດຊັດເຈນຕໍ່ສາທາລະນະຊົນ, ຫຼື ເກັບກຳຂໍ້ມູນແບບຜິດຈັນຍາບັນ (ເຊັ່ນ ການເຊື່ອງກ້ອງຖ່າຍຮູບ ຫຼື ການບຸກລຸກ), ອາດກາຍເປັນບັນຫາໄດ້. ຜູ້ກວດສອບຄວາມຈິງສາມາດຊ່ວຍລະບຸສັນຍານເຕືອນເຫຼົ່ານີ້ໄດ້.

## ການລະເມີດລິຂະສິດ:

ໂດຍທົ່ວໄປແລ້ວ, ທ່ານສາມາດອ້າງອີງຜົນງານອື່ນໄດ້ ພາຍໃຕ້ "ການນຳໃຊ້ໂດຍຊອບທຳ", ແຕ່ກໍບໍ່ສາມາດອ້າງອີງຜົນງານອື່ນໄດ້ທັງໝົດ.

ຜູ້ກວດສອບຄວາມຈິງສາມາດແຈ້ງເນື້ອໃນທີ່ຖືກນຳມາໃຊ້ຄືນໃໝ່ໄດ້ ເພື່ອຊ່ວຍໃຫ້ບັນນາທິການສາມາດຕັດສິນໃຈໄດ້ວ່າ ຈຳເປັນຕ້ອງຂໍຄຳແນະນຳທາງກົດໝາຍ ຫຼື ບໍ່.

## ການລອກແບບຜົນງານ:

ການກ່າຍເອົາຄຳເວົ້າ ຫຼື ແນວຄິດຂອງບຸກຄົນອື່ນ, ເຖິງແມ່ນຈະບໍ່ຜິດກົດໝາຍກໍຕາມ, ຍ່ອມເປັນຕົວທຳລາຍຄວາມໜ້າເຊື່ອຖື ແລະ ຊື່ສຽງຂອງສື່ສິ່ງພິມຂອງທ່ານໄດ້.

ຜູ້ກວດສອບຄວາມຈິງອາດກວດພົບປະໂຫຍກ ຫຼື ຂໍ້ມູນທີ່ນຳມາຈາກແຫຼ່ງຂໍ້ມູນໃນລັກສະນະໃກ້ຄຽງທີ່ສຸດ.

## ! ຄວນເກັບຮັກສາບັນທຶກຂອງທ່ານໄວ້ !

ຄວນຮັກສາບັນທຶກ, ແຫຼ່ງຂໍ້ມູນ ແລະ ຟາຍຂໍ້ມູນຂອງທ່ານໄວ້ ທັງໃນຮູບແບບດິຈິຕອນ ແລະ ເອກະສານ, ເພື່ອຊ່ວຍໃຫ້ທ່ານສາມາດຕອບກັບໄດ້ໃນກໍລະນີມີຄົນໂຕ້ແຍ້ງກ່ຽວກັບເນື້ອໃນຂ່າວຂອງທ່ານພາຍຫຼັງເຜີຍແຜ່ແລ້ວ.

- **ເກັບຮັກສາໃຫ້ເປັນລະບຽບ:** ທ່ານອາດຈຳເປັນຕ້ອງໄດ້ຄົ້ນຫາຂໍ້ມູນໃນຫຼາຍເດືອນ ຫຼື ຫຼາຍປີຕໍ່ມາ.
- **ຮັກສາຄວາມປອດໄພ:** ປົກປ້ອງເອກະສານສຳຄັນ, ໂດຍສະເພາະແຫຼ່ງຂໍ້ມູນທີ່ບໍ່ເປີດເຜີຍຕົວຕົນ.
- **ຮູ້ກຳນົດເວລາ:** ເກັບຮັກສາບັນທຶກໄວ້ໃຫ້ດົນເທົ່າທີ່ຈະສາມາດເຮັດໄດ້ ໂດຍອີງຕາມຂໍ້ກຳນົດທາງກົດໝາຍທ້ອງຖິ່ນ.

## ການກວດສອບຄວາມຈິງພາຍໃນ ທຽບກັບ ການກວດສອບຄວາມຈິງພາຍນອກ

| ທິດທາງ | ການກວດສອບຄວາມຈິງພາຍໃນ | ການກວດສອບຄວາມຈິງພາຍນອກ |
|---|---|---|
| **ນິຍາມ** | ການກວດສອບເນື້ອໃນທີ່ສ້າງໂດຍກອງບັນນາທິການ ຫຼື ອົງການຂອງທ່ານກ່ອນເຜີຍແຜ່. | ການກວດສອບຄຳອ້າງອີງ ຫຼື ຂໍ້ມູນທີ່ສ້າງໂດຍບຸກຄົນອື່ນ, ເຊັ່ນ: ບຸກຄົນທາງການເມືອງ, ສື່ອື່ນໆ ຫຼື ໂພສໃນສື່ສັງຄົມອອນລາຍ. |
| **ເປົ້າໝາຍ** | ຄວາມຖືກຕ້ອງ, ຄວາມໜ້າເຊື່ອຖືແລະການຄຸ້ມຄອງທາງກົດໝາຍສຳລັບເນື້ອໃນຂອງທ່ານ. | ຄວາມຮັບຜິດຊອບຕໍ່ສາທາລະນະຊົນ, ການປ້ອງກັນຂໍ້ມູນເທັດ, ແລະ ການຮັກສາຄວາມເຊື່ອໝັ້ນໃນການລາຍງານຂອງທ່ານ. |
| **ລະບົບການເຮັດວຽກ** | ບັນນາທິການ ຫຼື ຜູ້ກວດສອບຄວາມຈິງ ຈະກວດສອບສະບັບຮ່າງ, ຢືນຢັນແຫຼ່ງຂໍ້ມູນ, ກວດສອບໂຕເລກ, ແລະ ກວດສອບເນື້ອໃນບົດຂ່າວຄືນໃໝ່ອີກຄັ້ງ. | ການກວດສອບ: ອາດກ່ຽວຂ້ອງກັບການຕິດຕໍ່ແຫຼ່ງຂໍ້ມູນຕົ້ນສະບັບ, ການປຶກສາກັບຜູ້ຊ່ຽວຊານ, ການວິເຄາະຂໍ້ມູນ, ການກວດສອບບັນທຶກສາທາລະນະຊົນ, ເຊິ່ງມັກຈະໃຊ້ເວລາດົນກວ່າປົກກະຕິ ເນື່ອງຈາກຂໍ້ມູນຢູ່ນອກການຄວບຄຸມຂອງທ່ານ. |
| **ສິ່ງທ້າທາຍ** | ຈຳກັດສະເພາະວິທີການປະຕິບັດໃນການລາຍງານຂ່າວຂອງທ່ານເອງເປັນຫຼັກ; ເຂົ້າເຖິງແຫຼ່ງຂໍ້ມູນໄດ້ງ່າຍຂຶ້ນ. | ຈຳເປັນຕ້ອງມີການກວດສອບແຫຼ່ງຂໍ້ມູນພາຍນອກທີ່ທ່ານອາດບໍ່ສາມາດຄວບຄຸມໄດ້; ອາດມີກະແສຕໍ່ຕ້ານ ຫຼື ຂໍ້ໂຕ້ແຍ້ງກ່ຽວກັບຄຳອ້າງອີງ. |
| **ຂໍ້ຄວນພິຈາລະນາທາງກົດໝາຍ** | ຫຼຸດຜ່ອນຄວາມສ່ຽງຈາກການໝິ່ນປະໝາດ, ການລະເມີດຄວາມເປັນສ່ວນຕົວ, ການລະເມີດລິຂະສິດ, ການກ່າຍເອົາຜົນງານ (ຕາມທີ່ທ່ານລະບຸໄວ້). | ເພີ່ມຄວາມສັບຊ້ອນ: ຫາກທ່ານເຜີຍແຜ່ສະບັບດັດແກ້ ຫຼື ການໃຫ້ຄະແນນຄຳອ້າງອີງຂອງຜູ້ອື່ນ (ຈິງ/ເທັດ, ເຮັດໃຫ້ເຂົ້າໃຈຜິດ), ທ່ານອາດສ່ຽງຕໍ່ຂໍ້ຫ້າມໝິ່ນປະໝາດ<br>ຫາກຂາດຄວາມລະມັດລະວັງ. ດັ່ງນັ້ນ, ຈຶ່ງເປັນສິ່ງສຳຄັນຕ້ອງໄດ້ສ້າງເອກະສານຢ່າງ |
| **ຊັບພະຍາກອນທີ່ຈຳເປັນ** | ຄູ່ມືການຂຽນພາຍໃນ, ການເຂົ້າເຖິງແຫຼ່ງຂໍ້ມູນຕົ້ນສະບັບ, ລາຍການກວດສອບ, ນະໂຍບາຍຂອງກອງບັນນາທິການ. | ການເຂົ້າເຖິງຜູ້ຊ່ຽວຊານ, ຖານຂໍ້ມູນ, ເຄືອຂ່າຍກວດສອບຄວາມຈິງ, ບັນທຶກສາທາລະນະຊົນ, ແລະ ຫຼາຍຄັ້ງທີ່ຈຳເປັນຕ້ອງໃຊ້ວິທີການທີ່ເປັນທາງການຫຼາຍຂຶ້ນໃນການບັນທຶກຂັ້ນຕອນການກວດສອບ. |

# ວິທີການປ່ຽນແປງຂະບວນການກວດສອບຄວາມຈິງພາຍນອກ

## 1. ຂັ້ນຕອນການກວດສອບມີຄວາມເຂັ້ມງວດຫຼາຍຂຶ້ນ

• ທ່ານອາດຈຳເປັນຕ້ອງໄດ້ຕິດຕໍ່ແຫຼ່ງຂໍ້ມູນຕົ້ນສະບັບ, ຕິດຕາມບັນທຶກສາທາລະນະຊົນ, ຫຼື ປຶກສາຜູ້ຊ່ຽວຊານອິດສະຫຼະ.

• ການກວດສອບຂໍ້ມູນຈາກຫຼາຍແຫຼ່ງຖືເປັນສິ່ງສຳຄັນ —ບໍ່ຄວນເຊື່ອໃນທັນທີວ່າ ແຫຼ່ງຂໍ້ມູນດັ່ງກ່າວໜ້າເຊື່ອຖື.

## 2. ການບັນທຶກຫຼັກຖານ

• ເນື່ອງຈາກຄຳອ້າງອີງຂອງທ່ານ ກ່ຽວຂ້ອງກັບຄຳໃຫ້ການຂອງບຸກຄົນອື່ນ, ທ່ານຈຶ່ງຈຳເປັນຕ້ອງມີບັນທຶກທີ່ແໜ້ນໜາ ກ່ຽວກັບວິທີການກວດສອບຄວາມຈິງຂອງທ່ານ ເພື່ອປ້ອງກັນການເປີດເຜີຍທາງກົດໝາຍ.

## 3. ຄວາມໂປ່ງໃສແມ່ນສິ່ງສຳຄັນ

• ຊີ້ແຈງສິ່ງທີ່ທ່ານກວດສອບ, ວິທີກວດສອບ, ແລະ ຂໍ້ຈຳກັດຕ່າງໆ. ຕົວຢ່າງ: “ເນື້ອໃນຂໍ້ຄວາມ X ຖືກປະເມີນວ່າເປັນເທັດ ໂດຍອ້າງອີງຈາກບັນທຶກສາທາລະນະຊົນຂອງໜ່ວຍງານ Y ແລະ ການວິເຄາະຂອງຜູ້ຊ່ຽວຊານຈາກ Z”.

## 4. ການຕັດສິນໃຈດ້ານບັນນາທິການ

• ການກວດສອບຄວາມຈິງຈາກພາຍນອກ ອາດກ່ຽວຂ້ອງກັບການຕັດສິນໃຈທີ່ວ່າຈະລາຍງານກ່ຽວກັບປະເດັນໃດ ແລະ ລາຍງານແນວໃດ: ທ່ານຈະແກ້ໄຂຂໍ້ມູນໃຫ້ຖືກຕ້ອງ, ລາຍງານສະພາບເຫດການ, ຫຼື ໃຫ້ຄະແນນຄຳອ້າງອີງວ່າເປັນເທັດ/ເຮັດໃຫ້ເຂົ້າໃຈຜິດ? ການເລືອກວິທີການໃດໜຶ່ງ ຄວນພິຈາລະນາຜົນໄດ້ຮັບຕໍ່ຊື່ສຽງ ແລະ ກົດໝາຍຂອງອົງກອນ.

## 5. ການພິຈາລະນາຄວາມສ່ຽງທາງກົດໝາຍ

• ທ່ານກຳລັງປະເມີນຄວາມສ່ຽງໃນການເຜີຍແຜ່ຄຳຕັດສິນກ່ຽວກັບຜູ້ອື່ນ. ແມ່ນແຕ່ການກວດສອບຄວາມຈິງຢ່າງລະອຽດຖີ່ຖ້ວນກໍອາດນຳໄປສູ່ການໂຕ້ແຍ້ງໄດ້ຫາກມີຄົນກ່າວຫາວ່າໝິ່ນປະໝາດ. ຍ້ອນແນວນັ້ນ ຈຶ່ງເປັນເຫດຜົນທີ່ວ່າ ຍ້ອນຫຍັງການກວດສອບຄວາມຈິງຈາກພາຍນອກຈຶ່ງມັກກ່ຽວຂ້ອງກັບການກວດສອບທາງກົດໝາຍ.

# ເຫດຜົນທີ່ການກວດສອບຄວາມຈິງຊ່ວຍປົກປ້ອງທ່ານທາງກົດໝາຍ

- ມາດຕະການປ້ອງກັນທາງກົດໝາຍສຳລັບ**ການກວດສອບຄວາມຈິງພາຍໃນ** ຖືເປັນເລື່ອງລະອຽດອ່ອນ ເຊັ່ນ: ການກວດສອບການໝິ່ນປະໝາດ, ການລະເມີດຄວາມເປັນສ່ວນຕົວ, ລິຂະສິດ ແລະ ການກ່າຍເອົາຜົນງານເນື້ອໃນຂອງທ່ານເອງ.

- ຫຼັກການທາງກົດໝາຍດຽວກັນນີ້ມີຜົນບັງຄັບໃຊ້ສຳລັບການກວດສອບຄວາມຈິງພາຍນອກ, ແຕ່ຄວາມສ່ຽງຈະສູງກວ່າ ເປັນຕົ້ນແມ່ນ:

    - ການລະບຸຄຳອ້າງອີງຂອງຜູ້ອື່ນວ່າເປັນເທັດທັງທີ່ຄວາມຈິງບໍ່ແມ່ນແນວນັ້ນ, ອາດຖືກໂຕ້ແຍ້ງວ່າເປັນການໝິ່ນປະໝາດໄດ້.

    - ໂດຍທົ່ວໄປແລ້ວ, ບັນຫາຄວາມເປັນສ່ວນຕົວ ຫຼື ລິຂະສິດບໍ່ຄ່ອຍຈະມີຄວາມກ່ຽວຂ້ອງ ເນື່ອງຈາກທ່ານກຳລັງລາຍງານຂ່າວຕໍ່ສາທາລະນະຊົນກ່ຽວກັບຜູ້ອື່ນ.

    - ການສ້າງເອກະສານ ແລະ ການປຶກສາຫາລືກັບຜູ້ຊ່ຽວຊານຍິ່ງມີຄວາມສຳຄັນເປັນຢ່າງຍິ່ງ.

ສະຫຼຸບ: ການກວດສອບຄວາມຈິງພາຍໃນຈະສຸມໃສ່ການປ້ອງກັນບໍ່ໃຫ້ກອງບັນນາທິການຂ່າວຂອງທ່ານປະສົບບັນຫາທາງກົດໝາຍ. ການກວດສອບຄວາມຈິງພາຍນອກ ແມ່ນສຸມໃສ່ *ການປະເມີນຖ້ອຍຄຳຂອງຜູ້ອື່ນຢ່າງຖືກຕ້ອງ, ໃນຂະນະດຽວກັນເພື່ອຫຼີກເວັ້ນການເປີດເຜີຍຂໍ້ມູນໃໝ່ໆທາງກົດໝາຍ.* ຂະບວນການກວດສອບຄວາມຈິງພາຍໃນ ແມ່ນມີຄວາມເຂັ້ມງວດໃນລະດັບສູງ, ແຕ່ການກວດສອບຄວາມຈິງພາຍນອກ ຈະເນັ້ນໃສ່ການສືບສວນ-ສອບສວນ, ຄວາມສ່ຽງທາງກົດໝາຍ, ແລະ ໃຊ້ຊັບພະຍາກອນຈຳນວນຫຼາຍ.

# XIV. ການຕອບໂຕ້ກັບຂ່າວປອມ

ເມື່ອກວດພົບຂ່າວບິດເບືອນ ຫຼື ຂ່າວປອມ:

- **ເປີດໂປ່ງໃຫ້ເຫັນຄວາມຈິງ:** ຂຽນລາຍງານຂ່າວດ້ວຍຄວາມຈິງທີ່ຜົນການກວດສອບຄວາມຖືກຕ້ອງແລ້ວ, ໂດຍອ້າງອີງແຫຼ່ງຂໍ້ມູນທີ່ໜ້າເຊື່ອຖື. ຖ້າເປັນໄປໄດ້, ຄວນໃຊ້ຮູບພາບ ຫຼື ວີດີໂອ.

- **ລາຍງານໃນສື່ສັງຄົມອອນລາຍ:** Facebook, TikTok, ແລະ X ມີເຄື່ອງມືໃນຕົວສໍາລັບໃຊ້ລາຍງານຂໍ້ມູນເທັດ.

- **ຮ່ວມມືກັບຊ່ອງທາງອື່ນໆ:** ແບ່ງປັນຜົນການກວດສອບຄວາມຈິງຜ່ານເຄືອຂ່າຍຕ່າງໆ ເພື່ອເພີ່ມຈໍານວນການເຂົ້າເຖິງ.



# XV. ເຫດຜົນທີ່ການກວດສອບຄວາມຈິງສຳຄັນ

ການກວດສອບຄວາມຈິງຕ້ອງອາໄສເວລາ ແລະ ຄວາມພະຍາຍາມສູງ, ແຕ່ຊ່ວຍປົກປ້ອງສື່ສິ່ງພິມ, ນັກຂ່າວ ແລະ ຜູ້ອ່ານຂອງທ່ານ. ຄວາມຜິດພາດບໍ່ໄດ້ທຳລາຍສະເພາະຂ່າວພຽງຢ່າງດຽວ, ແຕ່ທຳລາຍຄວາມເຊື່ອໝັ້ນໃນສື່ໂດຍລວມ.

ສິ່ງສຳຄັນທີ່ສຸດສຳລັບນັກຂ່າວກໍຄື ຕ້ອງເວົ້າຄວາມຈິງຕໍ່ຜູ້ອ່ານ, ເຊິ່ງແມ່ນໜ້າທີ່ຂອງພວກເຮົາ.

## ລາຍການກວດສອບຄວາມຈິງຂັ້ນສຸດທ້າຍສຳລັບນັກຂ່າວ

ກ່ອນເຜີຍແຜ່ບົດຂ່າວ, ນັກຂ່າວຄວນໃຊ້ເວລາເລັກໜ້ອຍເພື່ອກວດເບິ່ງວ່າຜົນງານຂອງຕົນຖືກຕ້ອງ, ເປັນທຳ, ແລະ ເຊື່ອຖືໄດ້. ລາຍການກວດສອບຄວາມຈິງແບບໄວນີ້ຈະຊ່ວຍຢືນຢັນວ່າຄວາມຈິງ, ຄຳເວົ້າອ້າງອີງ ແລະ ຮູບພາບທຸກອັນ ລ້ວນແຕ່ສາມາດກວດສອບໄດ້.

ກ່ອນເຜີຍແຜ່ ທ່ານຄວນກວດສອບວ່າ:

- ມີການກວດສອບຂໍ້ມູນກັບແຫຼ່ງຂໍ້ມູນທີ່ເຊື່ອຖືໄດ້ແລ້ວບໍ່?

- ມີການກວດສອບຄວາມຈິງຂອງຂໍ້ກ່າວອ້າງ, ຮູບຖ່າຍ ຫຼື ຄຳເວົ້າອ້າງອີງທີ່ສຳຄັນແລ້ວບໍ່?

- ແຫຼ່ງທີ່ມາຂອງຂໍ້ມູນນີ້ຊັດເຈນ ແລະ ເຊື່ອຖືໄດ້ບໍ?

- ຂໍ້ມູນນີ້ອາດຖືກບິດເບືອນ ຫຼື ນຳໄປໃຊ້ໂດຍບໍ່ຄຳນຶງເຖິງສະພາບການໃດໆ ຫຼື ບໍ່?

- ໄດ້ນຳໃຊ້ເຄື່ອງມື ຫຼື ຖານຂໍ້ມູນ ເພື່ອຢືນຢັນ ຫຼື ເປີດໂປງຂໍ້ມູນ ຫຼື ບໍ່?

- ຫາກບໍ່ໝັ້ນໃຈ, ມີການລະບຸເຄື່ອງໝາຍຊັດເຈນແລ້ວບໍ?

ການປະຕິບັດຕາມລາຍການກວດສອບດັ່ງກ່າວ ຈະຊ່ວຍໃຫ້ນັກຂ່າວສາມາດຫຼຸດຜ່ອນຄວາມຜິດພາດໄດ້, ທັງສ້າງຄວາມເຊື່ອໝັ້ນແກ່ຜູ້ອ່ານ ແລະ ຮັກສາຄວາມຖືກຕ້ອງຄົບຖ້ວນໃນການລາຍງານຂ່າວ. ຄວາມຖືກຕ້ອງຂອງການລາຍງານບໍ່ໄດ້ເປັນພຽງຂັ້ນຕອນໃດໜຶ່ງເທົ່າ ນັ້ນ, ແຕ່ເປັນພື້ນຖານຂອງການລາຍງານຂ່າວທີ່ໜ້າເຊື່ອຖື.

## ການແນະນຳແຫຼ່ງຂໍ້ມູນສຳລັບກອງບັນນາທິການ

- ອົງກອນ **First Draft News:** firstdraftnews.org (ຄູ່ມືກວດສອບເນື້ອໃນອອນລາຍ).

- **ເຄືອຂ່າຍກວດສອບຄວາມຈິງສາກົນ (IFCN):** pointer.org/ifcn

- **ຊຸດເຄື່ອງມືກວດສອບຄວາມຖືກຕ້ອງທາງດິຈິຕອນຂອງຣອຍເຕີ:** reutersinstitute.politics.ox.ac.uk

- **ນັກຂ່າວໄຮ້ພົມແດນ (RSF) - ໂຄງການລິເລີ່ມຄວາມໜ້າເຊື່ອຖືໃນການລາຍງານຂ່າວ:** journalismtrustinitiative.org

## ການແນະນຳແຫຼ່ງຂໍ້ມູນສຳລັບກອງບັນນາທິການ

ຄວນຮັກສາຂໍ້ມູນໃຫ້ສະອາດ, ຊັດເຈນ ແລະ ເປັນຄວາມຈິງ, ເນື່ອງຈາກຜູ້ອ່ານຂອງທ່ານມີສິດສົມຄວນໄດ້ຮັບຂໍ້ມູນຂ່າວສານທີ່ດີທີ່ສຸດ.

ແຫຼ່ງຂໍ້ມູນທີ່ເຊື່ອຖືໄດ້ເຫຼົ່ານີ້ ໄດ້ໃຫ້ການສະໜັບສະໜູນອັນມີຄ່າແກ່ກອງບັນນາທິການຂ່າວທີ່ມີຄວາມມຸ່ງໝັ້ນໃນການຮັກສາຄວາມຖືກຕ້ອງ ແລະ ຄວາມຊື່ສັດ. ການນຳໃຊ້ແຫຼ່ງຂໍ້ມູນເຫຼົ່ານີ້ ຈະຊ່ວຍໃຫ້ນັກຂ່າວສາມາດເສີມສ້າງການລາຍງານຂ່າວ ແລະ ຮັກສາຄວາມເຊື່ອໝັ້ນຈາກຜູ້ອ່ານໄດ້.

ທ້າຍສຸດນີ້, ຄວາມໜ້າເຊື່ອຖື ເປັນພື້ນຖານຂອງການລາຍງານຂ່າວທີ່ມີຄຸນນະພາບ; ການຮັກສາຂໍ້ມູນໃຫ້ມີຄວາມຊັດເຈນ, ຊື່ສັດ ແລະ ເຊື່ອຖືໄດ້ ຖືເປັນສິ່ງທີ່ຜູ້ອ່ານຄວນໄດ້ຮັບຫຼາຍທີ່ສຸດ.

## ຄູ່ມືເຫຼັ້ມນີ້ອາດມີການກວດສອບ ແລະ ດັດແກ້ເປັນແຕ່ລະໄລຍະ.

ດ້ວຍວິວັດທະນາການທີ່ຂະຫຍາຍຕົວຢ່າງວ່ອງໄວທາງອິນເຕີເນັດ, ແພລດຟອມສື່ສັງຄົມອອນລາຍ, ແລະ ການປ່ຽນແປງທາງການເມືອງໃນລະດັບພາກພື້ນ, ການລາຍງານຂ່າວຢ່າງສະໝ່ຳ ສະເໝີ ຈະຊ່ວຍໃຫ້ສາມາດຮັບປະກັນໄດ້ວ່າ ແນວທາງແນະນຳຍັງຄົງມີຄວາມກ່ຽວຂ້ອງ ແລະ ມີປະສິດທິພາບ.

# ເອກະສານຊ້ອນທ້າຍ

## ວິທີລາຍງານບັນຊີປອມໃນສື່ສັງຄົມອອນລາຍ

### ການລາຍງານໜ້າ Facebook ປອມ

1. ໄປທີ່ໜ້າຂ່າວ.
2. ແຕະສາມຈຸດ (···) ຢູ່ລຸ່ມຮູບພາບໜ້າປົກ.
3. ເລືອກລາຍງານໜ້າ **(Report Page)**.
4. ເລືອກເຫດຜົນ (ເຊັ່ນ ປະຫວັດປອມ, ການປອມຕົວ, ຂໍ້ມູນເທັດ.
5. ສົ່ງລາຍງານ.

### ການລາຍງານບັນຊີ TikTok ປອມ

1. ໄປທີ່ປະຫວັດ **(profile)** → “Share”(ແບ່ງປັນ) ຫຼື “**Options**” (ຕົວເລືອກ).
2. ແຕະລາຍງານ **(Report)** → ເລືອກລາຍງານບັນຊີ **(Report account)**.
3. ເລືອກເຫດຜົນ → ສົ່ງ.

## ກໍລະນີສຶກສາ

### ຂ່າວລືເລື່ອງເສືອໃນນະຄອນຫຼວງວຽງຈັນ

- ໂພສທີ່ເປັນກະແສໃນ Facebook ໂດຍເຜີຍໃຫ້ເຫັນເສືອໂຕໜຶ່ງຢືນຢູ່ໃກ້ພະທາດຫຼວງ.
- ຜົນການຄົ້ນຫາໂດຍຮູບພາບພົບວ່າ ຮູບເສືອດັ່ງກ່າວມາຈາກອິນເດຍ (ປີ 2020).
- ບໍ່ມີສື່ ຫຼື ອຳນາດການປົກຄອງທ້ອງຖິ່ນຢືນຢັນ.
- ສວນສັດແຂວງວຽງຈັນອອກມາປະຕິເສດຂ່າວລື.
- **ສະຫຼຸບ:** ແມ່ນຂ່າວປອມ.

### ຂໍ້ມູນເທັດກ່ຽວກັບຮູບນໍ້າຖ້ວມ

- ຮູບພາບທີ່ເປັນກະແສອ້າງວ່ານໍ້າຖ້ວມນະຄອນຫຼວງວຽງຈັນ.
